ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

pwc

ເອກະສານລາຍງານການເງິນ
ວັນທີ 31 ທັນວາ 2018

www.pwc.com/la

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ສະເໜີຕໍ່ຄະນະຜູ້ອຳນວຍການ ແລະ ຜູ້ຖືຮຸ້ນຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ (ບໍລິສັດ) ໄດ້ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງ ເອກະສານລາຍງານສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບສະຫລຸບຊັບສິມບັດ ວັນທີ 31 ທັນວາ 2018
- ໃບລາຍງານຜົນໄດ້ຮັບສຳລັບທ້າຍປີ
- ໃບລາຍງານສ່ວນປ່ຽນແປງທຶນຕົນເອງສຳລັບທ້າຍປີ
- ໃບລາຍງານກະແສເງິນສິດສຳລັບທ້າຍປີ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດ ລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງ ພວກເຮົາ.

ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫລະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບອາຊີບນັກບັນຊີໃນສ່ວນທີ່ກ່ຽວຂ້ອງກັບການ ກວດສອບເອກະສານລາຍງານການເງິນທີ່ກຳນົດໂດຍຄະນະກຳມະການຈັນຍາບັນນານາຊາດ ສຳລັບນັກບັນຊີ (IESBA Code) ແລະ ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ. ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ ແລະ ຂໍ້ຫ້າມໃນການແຈກຢາຍ ແລະ ການນຳໃຊ້ ບົດລາຍງານການເງິນ

ໂດຍປາສະຈາກການອອກຄຳເຫັນແບບມີເງື່ອນໄຂ. ພວກເຮົາຮຽກຮ້ອງໃຫ້ທ່ານໃຫ້ຄວາມສົນໃຈຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງ ເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການບັນຊີ. ພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມບົດລາຍງານການ ເງິນສະບັບນີ້ ອາດມີຄວາມແຕກຕ່າງກັບພື້ນຖານການບັນຊີທົ່ວໄປທີ່ຖືກຍອມຮັບ ແລະ ຖືກນຳໃຊ້ໃນປະເທດ ແລະ ຂອບເຂດການຄຸ້ມ ຄອງອື່ນ. ດັ່ງນັ້ນ ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ, ຜົນ ການດຳເນີນງານ ແລະ ກະແສເງິນສິດຕາມກົດລະບຽບຂໍ້ປະຕິບັດ ໃນປະເທດອື່ນ ຫຼື ຂົງເຂດອື່ນນອກເໜືອຈາກ ສປປ ລາວ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີສິ້ນສຸດນີ້. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ມູນຄ່າຂອງລູກໜີ້ການຄ້າ ອີງຕາມບົດອະທິບາຍຊ້ອນທ້າຍຂໍ້ 7 'ການປະເມີນການບັນຊີທີ່ສຳຄັນ. ສົມມຸດຕິຖານ ແລະ ຂໍ້ສັງເກດ' ແລະ ບົດອະທິບາຍຊ້ອນທ້າຍຂໍ້ 9 'ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ' ໃນເອກະສານລາຍງານການເງິນ: ໃນວັນທີ 31 ທັນວາ 2018. ຍອດເຫຼືອໜີ້ຕ້ອງຮັບສຸດທິ 15.759 ລ້ານກີບ ຫຼື 2% ຂອງຍອດຊັບສິນທັງໝົດ ແລະ ຄ່າເຜື່ອໜີ້ທວງຍາກຈຳນວນ 1.089 ລ້ານກີບ. ລູກໜີ້ຄ້າງຊຳລະເກີນ 6 ເດືອນ ຈຳນວນ 80 ລ້ານກີບ ແລະ ລູກໜີ້ທີ່ຄ້າງຊຳລະເກີນ 12 ເດືອນ ຈຳນວນ 1.009 ລ້ານກີບ. ບໍລິສັດມີນະໂຍບາຍການປະເມີນຄວາມສາມາດໃນການເກັບເງິນ ແລະ ຕັ້ງຄ່າເຜື່ອໜີ້ທວງຍາກທີ່ເໝາະສົມ. ຜູ້ອຳນວຍການຈະພິຈາລະນາລູກໜີ້ທີ່ຄ້າງຊຳລະເກີນ 6 ເດືອນ ເຊິ່ງບໍ່ສາມາດເກັບເງິນໄດ້ຈາກທ້າຍງວດບັນຊີ ແລະ ຈະປະເມີນຄ່າເຜື່ອໜີ້ທວງຍາກ ໂດຍໃຊ້ຂໍ້ມູນຈາກປະຫວັດການຊຳລະເງິນ ແລະ ຄາດຄະເນຄວາມສາມາດໃນການຈ່າຍເງິນຂອງລູກໜີ້ແຕ່ລະລາຍ. ພວກເຮົາໃຫ້ຄວາມສຳຄັນກັບເລື່ອງນີ້ ເນື່ອງຈາກຍອດລວມຂອງໜີ້ຕ້ອງຮັບມີຈຳນວນຫຼາຍ ແລະ ເປັນການຕັ້ງປະເມີນການຂອງຜູ້ອຳນວຍການ ໂດຍການພິຈາລະນາຂອງຜູ້ອຳນວຍການເຊິ່ງຂຶ້ນຢູ່ກັບສົມມຸຕິຖານກ່ຽວກັບກະແສເງິນສົດຮັບໃນອະນາຄົດ ແລະ ຄວາມສ່ຽງໃນການເກັບເງິນ.	ພວກເຮົາປະເມີນຄວາມເໝາະສົມຂອງຄ່າເຜື່ອໜີ້ທວງຍາກ ໂດຍ: • ປະເມີນ ແລະ ທົດສອບ ປະສິດທິພາບໃນການອອກແບບ ແລະ ການດຳເນີນງານຂອງການຄວບຄຸມການແບ່ງແຍກ ໜ້າທີ່ ກ່ຽວກັບການທົບທວນ ແລະ ອະນຸມັດ ສິນເຊື່ອ, ການເຂົ້າເຖິງ ແລະ ຂໍ້ຈຳກັດ ຂອງລະບົບ; • ທົດສອບຄວາມໜ້າເຊື່ອຖືຂອງບົດລາຍງານອາຍຸໜີ້ຕ້ອງຮັບທີ່ໃຊ້ການປະເມີນຄ່າເຜື່ອໜີ້ທວງຍາກ; • ສອບຖາມ ແລະ ປະເມີນເຖິງຄວາມເໝາະສົມຂອງນະໂຍບາຍການຕັ້ງຄ່າເຜື່ອໜີ້ທວງຍາກ • ສົມທຽບຄ່າເຜື່ອໜີ້ທວງຍາກໃນອະດີດ ສຳລັບຄ່າເຜື່ອໜີ້ທວງຍາກ ແລະ ການເກັບເງິນໄດ້ຕົວຈິງ ລວມເຖິງການເຄື່ອນໄຫວຂອງຍອດເຫຼືອການຄ້າ; • ການປະເມີນຄວາມເປັນໄປໄດ້ໃນການຮຽກເກັບໜີ້ ແລະ ລວມເຖິງ ໃບລາຍງານຖານະການເງິນ ຂອງ ບັນຊີໜີ້ຕ້ອງຮັບ ແລະ ຄ່າເຜື່ອໜີ້ທວງຍາກ ໂດຍພິຈາລະນາເປັນລູກໜີ້ໃນແຕ່ລະລາຍ, ແລະ • ຕິດຕາມການຊຳລະຕົວຈິງຈາກບັນຊີໜີ້ຕ້ອງຮັບ ຈົນເຖິງວັນທີ່ລາຍງານຜູ້ກວດສອບ. ດັ່ງນັ້ນ. ພວກເຮົາພົບວ່າ ຄ່າເຜື່ອໜີ້ທວງຍາກມີຄວາມສົມເຫດສົມຜົນ ແລະ ສອດຄ່ອງກັບຂໍ້ມູນໃນອະດີດ ແລະ ສອບຄ່ອງກັບຫຼັກຖານປະຫວັດການເກັບເງິນຄືນ.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ມູນຄ່າຂອງເຄື່ອງໃນສາງ ອີງຕາມບົດອະທິບາຍຊ້ອນທ້າຍຂໍ້ 7 'ການປະເມີນການບັນຊີທີ່ສຳຄັນ. ສົມມຸດຕິຖານ ແລະ ຂໍ້ສັງເກດ' ແລະ ບົດອະທິບາຍຊ້ອນທ້າຍຂໍ້ 10 'ສິນຄ້າໃນສາງ ສຸດທິ' ໃນເອກະສານລາຍງານການເງິນ. ໃນວັນທີ 31 ທັນວາ 2018. ຍອດເຫຼືອສິນຄ້າໃນສາງສຸດທິ 192.544 ລ້ານກີບ ເທົ່າກັບ 27% ຂອງຍອດຊັບສິນທັງໝົດ ຂອງບໍລິສັດ. ສິນຄ້າໃນສາງສຸດທິລວມມີ ຄ່າເຜື່ອຄ່າເຊື່ອມມູນຄ່າ ຂອງສິນຄ້າໃນສາງ 2.337 ລ້ານກີບ, ສິນຄ້າໃນສາງນີ້ ສ່ວນໃຫຍ່ ປະກອມີ ຄ່າສິນຄ້າຄົງເຫຼືອໃນຫ້ອງສະແດງສິນຄ້າ ແລະ ສິນຄ້າຄົງເຫຼືອ ໃນສາງສິນຄ້າ. ວັນທີ 31 ທັນວາ 2018, ຜູ້ບໍລິຫານໄດ້ທົບທວນຄືນການຕັ້ງຄ່າເຜື່ອສຳລັບສິນຄ້າເຄື່ອນໄຫວຊ້າ ແລະ ຫລ້າສະໄໝ ໂດຍພິຈາລະນາຈາກຂໍ້ມູນທັງສອງໃນອະດີດ ລວມທັງສະພາບຂອງສິນຄ້າໃນສາງຈາກການນັບສິນຄ້າໃນສາງ ແລະ ຄວາມເປັນໄປໄດ້ໃນການຂາຍສິນຄ້າໃນອະນາຄົດ, ຜູ້ບໍລິຫານໄດ້ປະເມີນການເຄື່ອນໄຫວຂອງສິນຄ້າໃນສາງ ແລະ ລະບຸກຸ່ມຂອງຜະລິດຕະພັນທີ່ເຄື່ອນໄຫວຊ້າ ແລະ ຫລ້າສະໄໝ, ຜູ້ບໍລິຫານຍັງໄດ້ຕັ້ງຄ່າເຜື່ອສຳລັບສິນຄ້າເຄື່ອນໄຫວຊ້າ ແລະ ຫລ້າສະໄໝ ໂດຍການນຳໃຊ້ ອັດຕາເປີເຊັນ ທີ່ແຕກຕ່າງກັນໄປ ສຳລັບສິນຄ້າທີ່ບໍ່ເຄື່ອນໄຫວຕັ້ງແຕ່ຫົກເດືອນເປັນຕົ້ນໄປ ເຊິ່ງຜູ້ບໍລິຫານພິຈາລະນາແລ້ວເຫັນວ່າລາຍການທີ່ເກີດຂຶ້ນໃນອະດີດ ແລະ ການຄາດຄະເນຂອງລາຍການຂາຍໃນອະນາຄົດ ຂອງສິນຄ້າໃນສາງທີ່ກ່ຽວຂ້ອງ. ນອກຈາກນີ້ບໍລິສັດປະເມີນມູນຄ່າສິນຄ້າໃນສາງດ້ວຍລາຄາທຶນ ຫຼື ມູນຄ່າສຸດທິທີ່ຈະໄດ້ຮັບ (NRV) ຜູ້ບໍລິຫານປະເມີນມູນຄ່າສຸດທິທີ່ຈະໄດ້ຮັບໂດຍປຽບທຽບກັບລາຄາຂາຍປົກກະຕິ ຫັກຄ່າໃຊ້ຈ່າຍໃນການຂາຍ. ພວກເຮົາສຸມໃສ່ບັນຫານີ້ເພາະວ່າການປະເມີນມູນຄ່າຂອງສິນຄ້າຄົງເຫຼືອເປັນການຕັດສິນໃຈຂອງຜູ້ບໍລິຫານຢ່າງມີສາລະສຳຄັນກ່ຽວກັບການປະເມີນຂອງມູນຄ່າສຸດທິທີ່ຄາດວ່າຈະໄດ້ຮັບ ແລະ ຄ່າເຜື່ອສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝ	ພວກເຮົາປະເມີນຄວາມເໝາະສົມຂອງການປະເມີນມູນຄ່າສິນຄ້າຄົງຄ້າງໂດຍ: • ທຳຄວາມເຂົ້າໃຈນະໂຍບາຍຂອງບໍລິສັດ ກ່ຽວກັບການຄິດໄລ່ມູນຄ່າຂອງເຄື່ອງໃນສາງ ແລະ ທົບທວນຄືນຂັ້ນຕອນການເກັບຂໍ້ມູນເພື່ອໃຫ້ໝັ້ນໃຈວ່າກວດກາຖືກຕ້ອງ ແລະ ຄົບຖ້ວນກ່ຽວກັບຂໍ້ມູນທີ່ກ່ຽວຂ້ອງທີ່ໃຊ້ສຳລັບການທົບທວນຄືນຂອງພວກເຮົາ; • ດຳເນີນການກວດສອບການຄວບຄຸມພາຍໃນ ການຈັດຊື້ ແລະ ຊຳລະເງິນ ເຊິ່ງລວມມີ ໃບຂໍອະນຸຍາດສັ່ງຊື້, ໃບສັ່ງຊື້, ການຮັບສິນຄ້າ, ການຊຳລະ ແລະ ການບັນທຶກ ເພື່ອທົດສອບຄວາມຖືກຕ້ອງຂອງຕົ້ນທຶນສິນຄ້າໃນສາງ; • ວິເຄາະການເຄື່ອນໄຫວຂອງສິນຄ້າ ແລະ ປຽບທຽບຜົນລັບກັບຜົນການປະເມີນສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝຂອງຜູ້ບໍລິຫານ; • ການຕິດຕາມການນັບສິນຄ້າໃນສາງໂດຍຜູ້ບໍລິຫານ ລວມທັງການກວດກາກັບການຄິດໄລ່ຄ່າເຜື່ອທີ່ກ່ຽວຂ້ອງ ໂດຍສະເພາະ ສິນຄ້າຫລ້າສະໄໝ ແລະ ເປ່ເພ. • ປຽບທຽບຜົນລັບກັບຜົນການປະເມີນສິນຄ້າເຄື່ອນໄຫວຊ້າ ແລະ ລ້າສະໄໝ ກັບ ຂໍ້ມູນໃນການຂາຍໂດຍຜູ້ບໍລິຫານ; • ປະເມີນຄວາມເໝາະສົມໃນການຄິດໄລ່ລາຄາຂາຍຕໍ່ຫົວໜ່ວຍຂອງຜູ້ບໍລິຫານ ແລະ ສຸ່ມກວດກາລາຄາຂາຍຫຼັງທ້າຍງວດບັນຊີ ແລະ ຫຼັກຖານປະກອບທີ່ກ່ຽວຂ້ອງ. ຈາກຂັ້ນຕອນຂ້າງເທິງ ພວກເຮົາເຫັນວ່າ ຜູ້ອຳນວຍການ ປະເມີນການຄ່າເຜື່ອສິນຄ້າເຄື່ອນໄຫວຊ້າ, ລ້າສະໄໝ ແລະ ມູນຄ່າສຸດທິ ທີ່ຄາດວ່າຈະໄດ້ຮັບສົມເຫດສົມຜົນ.

ຂໍ້ມູນອື່ນ

ຜູ້ບໍລິຫານມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນປະຈຳປີແຕ່ບໍ່ລວມເຖິງເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບເອກະສານລາຍງານການເງິນປະຈຳປີພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄວບຄຸມເຖິງຂໍ້ມູນອື່ນ ແລະ ບໍ່ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນອື່ນ.

ໃນຖານະທີ່ເປັນສ່ວນໜຶ່ງໃນການກວດສອບຂອງພວກເຮົາ ຄວາມຮັບຜິດຊອບຂອງພວກເຮົາທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນກັບເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບ ແລະ ຜູ້ບໍລິຫານຊາບເພື່ອດັດແກ້ ແລະ ເຜີຍແຜ່ບົດລາຍງານອີກເທື່ອໜຶ່ງ.

ຄວາມຮັບຜິດຊອບຂອງຜູ້ບໍລິຫານ ແລະ ຄະນະກຳມະການກວດສອບ ຕໍ່ເອກະສານລາຍງານການເງິນ

ຜູ້ບໍລິຫານມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີ ໂດຍສອດຄ່ອງກັບ ຫຼັກການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການການກວດສອບມີໜ້າທີ່ຊ່ວຍຜູ້ບໍລິຫານເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນຂອງບໍລິສັດ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ເໝາະສົມກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງປັບທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ ບຸກຄົນພາຍນອກອາດພິຈາລະນາເຖິງການກະທົບຕໍ່ຄວາມເປັນອິດສະຫຼະຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ. ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີ ສ໌ (ລາວ) ຈຳກັດ ຜູ້ດຽວ

ໄພບູນ ຕັນກາມ
ຜູ້ຖືຮຸ້ນ
ວຽງຈັນ, ສປປ ລາວ
ວັນທີ: 22 ກຸມພາ 2019

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	8	8.873.646.944	6.419.034.448
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	9	15.759.344.828	17.638.531.080
ເຄື່ອງໃນສາງ, ສຸດທິ	10	192.544.408.281	147.717.645.836
ຊັບສິນໝຸນວຽນອື່ນໆ	11	5.789.722.614	7.767.536.365
ລວມຊັບສິນໝຸນວຽນ		222.967.122.667	179.542.747.729
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	12	490.347.457.551	460.349.989.027
ຊັບສິນຄົງທີ່ທີ່ບໍ່ມີຕົວຕົນ, ສຸດທິ	13	167.647.579	439.776.032
ຊັບສິນບໍ່ໝຸນວຽນອື່ນໆ		1.566.867.647	1.406.529.387
ລວມຊັບສິນບໍ່ໝຸນວຽນ		492.081.972.777	462.196.294.446
ລວມຊັບສິນ		**715.049.095.444**	**641.739.042.175**

ອັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
ໃບລາຍງານຖານະການເງິນ
ວັນທີ 31 ທັນວາ 2018

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ໜີ້ສິນ ແລະ ທຶນຕົນເອງ			
ໜີ້ສິນໝຸນວຽນ			
ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ	15	57.561.798.309	43.792.632.441
ບັນຊີໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ສຸດທິ	14	44.053.148.989	43.281.722.600
ສ່ວນໝຸນວຽນຂອງເງິນໃຫ້ກູ້ຢືມໄລຍະຍາວ	15	7.199.814.350	252.010.000
ເງິນມັດຈຳຈາກລູກຄ້າ	17	25.868.305.744	24.729.063.838
ໜີ້ສິນໝຸນວຽນອື່ນໆ		10.333.441.565	6.392.523.550
ລວມໜີ້ສິນໝຸນວຽນ		145.016.508.957	118.447.952.429
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	15	21.831.908.085	354.800.090
ລວມໜີ້ສິນບໍ່ໝຸນວຽນ		21.831.908.085	354.800.090
ລວມໜີ້ສິນ		166.848.417.042	118.802.752.519
ທຶນຕົນເອງ			
ທຶນຈົດທະບຽນ			
ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		24.735.724.722	24.735.724.722
ກຳໄລສະສົມ			
ເງິນສຳຮອງຕາມກົດໝາຍ	20	3.652.027.345	3.332.971.187
ເງິນສຳຮອງອື່ນໆ	20	3.402.027.345	3.082.971.187
ກຳໄລທ້າແບ່ງປັນ		149.927.522.108	149.025.072.849
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		36.483.376.882	12.759.549.711
ລວມທຶນຕົນເອງ		548.200.678.402	522.936.289.656
ລວມໜີ້ສິນ ແລະ ທຶນຕົນເອງ		**715.049.095.444**	**641.739.042.175**

ອັດຕາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 35 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ລາຍໄດ້ຈາກການຂາຍ		333.881.394.225	299.063.433.879
ລາຍໄດ້ຈາກການບໍລິການ		1.605.967.787	1.875.531.911
ຕົ້ນທຶນໃນການຂາຍ	21	(281.421.563.608)	(248.599.239.120)
ຕົ້ນທຶນໃນການບໍລິການ	21	(804.712.678)	(1.040.362.547)
ກຳໄລລວມຂັ້ນຕົ້ນ		**53.261.085.726**	**51.299.364.123**
ລາຍຮັບອື່ນໆ		5.603.556.218	4.346.876.845
ລາຍຈ່າຍໃນການຂາຍ	21	(28.865.208.947)	(30.209.619.011)
ລາຍຈ່າຍບໍລິຫານ	21	(24.284.445.657)	(20.855.956.388)
ລາຍຈ່າຍການເງິນ		(4.491.330.120)	(1.933.725.791)
ກຳໄລຈາກອັດຕາແລກປ່ຽນ, ສຸດທິ		1.966.904.355	531.145.525
ກຳໄລ ກ່ອນຈ່າຍອາກອນກຳໄລ		**3.190.561.575**	**3.178.085.303**
ອາກອນກຳໄລ		-	(389.301.333)
ກຳໄລສຸດທິໃນປີ		**3.190.561.575**	**2.788.783.970**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	23	20	17

ອັດຕາ ສຸຕະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໄມລາ ສຸຕະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

	ຍິດ ອະທິບາຍ	ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສຳຮອງເງິນ ຕາມກົດໝາຍ ກີບ	ສຳຮອງເງິນ ອື່ນໆ ກີບ	ກຳໄລສະສົມ ລໍຖ້າແບ່ງປັນ ກີບ	ຜິດຕ່ຽງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ	ລວມ ກີບ
ຍອດຍົກມາ ວັນທີ 1 ມັງກອນ 2017		330.000.000.000	24.735.724.722	2.906.968.288	2.656.968.288	150.388.294.677	(40.027.820.095)	470.660.135.880
ສຳຮອງເງິນຕາມກົດໝາຍ		-	-	426.002.899	-	(426.002.899)	-	-
ສຳຮອງເງິນອື່ນໆ		-	-	-	426.002.899	(426.002.899)	-	-
ກຳໄລສຸດທິໃນປີ		-	-	-	-	4.260.029.000	-	4.260.029.000
ຈ່າຍເງິນປັນຜົນ	24	-	-	-	-	(3.300.000.000)	-	(3.300.000.000)
ຜິດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	52.787.369.806	52.787.369.806
ດັດແກ້ຂໍ້ຜິດພາດ	4	-	-	-	-	(1.471.245.030)	-	(1.471.245.030)
ຍອດເຫຼືອໃນວັນທີ 30 ມິຖຸນາ 2017		330.000.000.000	24.735.724.722	3.332.971.187	3.082.971.187	149.025.072.849	12.759.549.711	522.936.289.656
ຍອດຍົກມາ ວັນທີ 1 ມັງກອນ 2018		330.000.000.000	24.735.724.722	3.332.971.187	3.082.971.187	149.025.072.849	-	522.936.289.656
ສຳຮອງເງິນຕາມກົດໝາຍ		-	-	319.056.158	-	(319.056.158)	-	-
ສຳຮອງເງິນອື່ນໆ		-	-	-	319.056.158	(319.056.158)	-	-
ກຳໄລສຸດທິໃນປີ		-	-	-	-	3.190.561.575	-	3.190.561.575
ຈ່າຍເງິນປັນຜົນ	24	-	-	-	-	(1.650.000.000)	-	(1.650.000.000)
ຜິດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	23.723.827.171	23.723.827.171
ຍອດເຫຼືອໃນວັນທີ 31 ທັນວາ 2018		330.000.000.000	24.735.724.722	3.652.027.345	3.402.027.345	149.927.522.108	36.483.376.882	548.200.678.402

ອັດດາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂມລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

ຍິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 35 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ		3.190.561.575	2.788.783.970
ການດັດແກ້:			
ຄ່າຫຼ້ຍຫ້ຽນ	12	11.902.241.767	10.233.280.643
ຄ່າເຊື່ອມມູນຄ່າ	13	308.434.261	307.144.234
ກຳໄລຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ		(104.097.362)	(124.663.895)
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນ		150.443.621	585.264.943
ລາຍຈ່າຍດອກເບ້ຍ		4.491.330.120	2.018.210.494
ສຳຮອງເຄື່ອງໃນສາງ	10	(2.337.256.219)	5.049.327.928
ສຳຮອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	9	(1.088.932.900)	76.041.109
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງເງິນທຶນໝຸນວຽນ		16.512.724.863	20.933.389.426
ການປ່ຽນແປງຈາກ ການດຳເນີນງານຂອງເງິນທຶນໝຸນວຽນ			
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		3.920.693.630	2.558.437.576
- ເຄື່ອງໃນສາງ		(35.801.673.698)	(31.012.655.106)
- ຊັບສິນໝຸນວຽນອື່ນໆ		2.329.484.549	(2.086.613.552)
- ຊັບສິນບໍ່ໝຸນວຽນອື່ນໆ		(96.658.441)	203.453.956
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(1.188.129.022)	1.212.871.358
- ເງິນມັດຈຳຈາກລູກຄ້າ		19.647.584	(1.014.620.323)
- ໜີສິນໝຸນວຽນອື່ນໆ		3.462.234.731	5.904.313.474
ກະແສເງິນສົດໃຊ້ສຳລັບການດຳເນີນງານ		(10.841.675.804)	(3.301.423.191)
ຈ່າຍດອກເບ້ຍ		(4.302.064.709)	(2.018.210.494)
ຈ່າຍອາກອນກຳໄລ	16	(154.000.000)	(774.688.240)
ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳ ການດຳເນີນງານ		(15.297.740.513)	(6.094.321.925)
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ			
ຊື້ຊັບສິນບັດຄົງທີ		(21.057.619.375)	(52.614.172.047)
ຊື້ໂປຣແກຼມຄອມພິວເຕີ		(16.395.198)	(232.340.357)
ລາຍຮັບຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ		104.090.768	124.896.100
ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ		(20.969.923.805)	(52.721.616.304)

ອັດທະນາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໄມລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ກະແສເງິນສົດຈາກກິດຈະກຳການເງິນ			
ລາຍຮັບຈາກ ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ		11.786.479.304	93.260.470.052
ການຊຳລະຄືນຂອງເງິນກູ້ຢືມຈາກທະນາຄານ		28.397.439.363	(52.357.670.944)
ຈ່າຍເງິນປັນຜົນ	24	(1.650.000.000)	(3.300.000.000)
ເງິນສົດສຸດທິຈາກກິດຈະກຳທາງການເງິນ		38.533.918.667	37.602.799.108
ໝຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		2.266.254.350	(21.213.139.122)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ		6.419.034.448	25.356.184.703
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		188.358.146	2.275.988.867
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍປີ		**8.873.646.944**	**6.419.034.448**
ລາຍການບໍ່ແມ່ນເງິນສົດ			
ໜີ້ຕ້ອງສົ່ງອື່ນໆ ຈາກການຊື້ຊັບສິນຄົງທີ່		574.895.993	233.080.100
ໜີ້ຕ້ອງສົ່ງດອກເບ້ຍ		189.265.411	-

ອັດຕານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

1. ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ຊື່ເກົ່າແມ່ນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ) ເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ. ກິດຈະການຫຼັກແມ່ນຂາຍສິນຄ້າ ແລະ ອຸປະກອນສຳລັບການກໍ່ສ້າງ ນອກຈາກນັ້ນ ຍັງມີການຕົບແຕ່ງ, ການສ້ອມແປງ ແລະ ປັບປຸງອາຄານ, ບ້ານເຮືອນ ແລະ ສະຖານທີ່ຢ່ອາໄສ ແລະ ສະໜອງການ ບໍລິການທີ່ກ່ຽວຂ້ອງ ໃຫ້ກັບທຸລະກິດຂາຍຍ່ອຍ.

ມີສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສ ປປ ລາວ. ແລະ ຍັງມີສາຂາ 4 ສາຂາຢູ່ໃນນະຄອນຫຼວງວຽງຈັນເຊັ່ນ: ບ້ານ ທົ່ງຂັນຄຳ, ສີໄຄ, ທົ່ງຕຸມ ແລະ ບ້ານ ໂຊກໃຫຍ່.

ໃນເດືອນມິນາ 2018 ບໍລິສັດໄດ້ປິດສາຂາທົ່ງຂັນຄຳ, ນະຄອນຫຼວງວຽງຈັນ.

ໃນວັນທີ 17 ມິຖຸນາ 2018, ບໍລິສັດໄດ້ເປີດສາຂາໃໝ່ຢູ່ເມືອງປາກເຊ ແຂວງຈຳປາສັກ.

ເອກະສານລາຍງານການເງິນສະບັບນີ້ໄດ້ຜ່ານການອະນຸມັດ ໂດຍຜູ້ອຳນວຍການ ໃນວັນທີ 22 ກຸມພາ 2019.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ

ວິທີການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນ ທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍວ່າດ້ວຍການບັນຊີ ແລະ ຂໍ້ກຳນົດກ່ຽວກັບການບັນຊີ ແລະ ການກວດສອບບັນຊີ ໃນສ່ວນຫຼັກຊັບ ພາຍໃຕ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ໃນ ສປປ ລາວ, ບໍລິສັດທີ່ຈົດທະບຽນໃນຕະຫຼາດ ຫຼັກຊັບ ຕ້ອງສ້າງເອກະສານລາຍງານການເງິນຕາມມາດຕະຖານລາຍງານທາງການເງິນສາກົນ ('IFRS') ຊຶ່ງເປັນຫຼັກການ ບັນຊີທີ່ຮັບຮອງທົ່ວໄປ.ປັດຈຸບັນ LSCO ຍັງຜ່ອນຜັນ ແລະ ອານຸຍາດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ປະຕິບັດຕາມນະໂຍບາຍການບັນຊີທີ່ສຳຄັນຂອງບໍລິສັດ ແຕ່ສະໜັບສະໜຸນໃຫ້ບໍລິສັດໃນຕະຫຼາດຫຼັກຊັບໄດ້ນຳໃຊ້ IFRS ໄປໃຊ້ໃນອະນາຄົດອັນໃກ້ນີ້ ໃນປະເທດລາວ ຂໍ້ແຕກຕ່າງທີ່ມີສາລະສຳຄັນລະຫວ່າງບັນຊີຂອງບໍລິສັດ ກັບ IFRS ໃນຫຼາຍໆດ້ານ ເຊັ່ນ: ຊັບສິນບັດຄີງທີ່ມີຕົວຕົນ, ສັນຍາເຊົ່າ,ລາກອນລາຍໄດ້ ແລະ ຄ່າໃຊ້ຈ່າຍກ່ອນການດຳເນີນງານ ຜູ້ໃຊ້ ເອກະສານລາຍງານການເງິນຄວນເຂົ້າໃຈຄວາມແຕກຕ່າງທີ່ອາດມີຜົນກະທົບຕໍ່ການຕັດສິນໃຈໃນການນຳໃຊ້ຂໍ້ມູນໃນ ເອກະສານລາຍງານການເງິນ ແລະ ນຳໃຊ້ຢ່າງລະມັດລະວັງ.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດ ຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນ ຮອບເວລາລາຍງານ. ສະນັ້ນ. ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງ ຝ່າຍບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດ ຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.2 ການປ່ຽນຄ່າເງິນຕາຕ່າງປະເທດ

ກ) ສະກຸນເງິນຫຼັກທີ່ນຳໃຊ້ ແລະ ນຳສະເໜີ

ການວັດມູນຄ່າໃນເອກະສານລາຍງານການເງິນຂອງບໍລິສັດແມ່ນຮັບຮູ້ເປັນສະກຸນເງິນຍາດ ເຊິ່ງເປັນສະກຸນເງິນຫຼັກທາງເສດຖະກິດໃນການປະຕິບັດງານຂອງບໍລິສັດ.

ເອກະສານລາຍງານການເງິນ ໄດ້ນຳສະເໜີເປັນສະກຸນເງິນກີບ (ສະກຸນເງິນທີ່ນຳສະເໜີ). ໂດຍອີງຕາມລະບຽບກົດໝາຍພາຍໃນ. ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ຂໍ້ກຳນົດ ຂອງ ຄະນະກຳມະການ ຄຸ້ມຄອງຫຼັກຊັບ (LSCO).

ບໍລິສັດໄດ້ແປງເອກະສານລາຍງານການເງິນຈາກສະກຸນຍາດ ເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ນຳສະເໜີດັ່ງຕໍ່ໄປນີ້:

- ຊັບສິນ ແລະ ໜີ້ສິນ ໃນໃບສະຫລຸບຊັບສິນບັດທີ່ນຳສະເໜີ ແມ່ນຖືກແປງຄ່າ ດ້ວຍອັດຕາແລກປ່ຽນຂອງມື້ໃບສະຫລຸບຊັບສິນບັດ ຍົກເວັ້ນທຶນຈົດທະບຽນເຊິ່ງຖືກນຳສະເໜີໂດຍອີງຕາມມູນຄ່າຕົ້ນທຶນເດີມ.

- ລາຍຮັບ ແລະ ລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ແມ່ນ ຖືກແປງຄ່າ ດ້ວຍອັດຕາແລກປ່ຽນສະເລ່ຍໃນລະຫວ່າງປີ.

- ຜົນແຕກຕ່າງຈາກການແປງຄ່າ ແມ່ນຮັບຮູ້ ແລະ ສະແດງພາຍໃຕ້ຄ່າຜິດຕ່ຽງຈາກການແປງຄ່າ ເອກະສານລາຍງານການເງິນໃນສ່ວນປ່ຽນແປງທຶນຕົນເອງ ຂອງຜູ້ຖືຮຸ້ນ.

ຂ) ລາຍການເຄື່ອນໄຫວ ແລະ ຍອດຄົງເຫຼືອ

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດຈະຖືກປ່ຽນຄ່າເປັນສະກຸນເງິນຍາດໂດຍໃຊ້ອັດຕາແລກປ່ຽນຂອງບໍລິສັດ ໃນວັນທີ ທີ່ມີລາຍການນັ້ນເກີດຂຶ້ນ. ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງການສະສາງບັນດາລາຍການເຄື່ອນໄຫວ ແລະ ການແປງຄ່າ ອັດຕາແລກປ່ຽນໃນທ້າຍປີ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ໃນສະກຸນເງິນຕາຕ່າງປະເທດແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ 'ກຳໄລ (ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນ'.ໂດຍອັດຕາແລກປ່ຽນແມ່ນນຳໃຊ້ຈາກ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL).

2.3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ໃນໃບລາຍງານກະແສເງິນສົດ, ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມເຖິງ ເງິນສົດໃນມື. ເງິນຝາກທະນາຄານທີ່ສາມາດຖອນຄືນໄດ້ໃນເວລາຕ້ອງການ ແຕ່ບໍ່ລວມເຖິງເງິນຝາກກັບທະນາຄານທີ່ຝາກຈົນຄົບກຳນົດ ແລະ ເງິນລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ຊື້. ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີ ຈະຖືສະແດງໃນໜີ້ສິນໝຸນວຽນ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.4 ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າ ແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາ ແມ່ນນຳມູນຄ່າຍັງ ເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໃສຈະເສຍ ໂດຍອີງຕາມການກວດການຸມຄ່າຄ້າງຊຳລະທັງໝົດໃນທ້າຍປີ. ຈຳນວນເງິນທີ່ຫັກ ຂອງໜີ້ສົງໃສຈະເສຍ ແມ່ນສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີ ຂອງໜີ້ຕ້ອງຮັບ ແລະ ມູນຄ່າທີ່ຄາດວ່າຈະເກັບຄືນໄດ້. ໜີ້ເສຍແມ່ນຈະຖືກສະສາງໃນປີເຊິ່ງຈະຖືກລະບຸໃນກຳໄລ ຫຼື ຂາດທຶນພາຍໃຕ້ລາຍຈ່າຍບໍລິຫານ.

2.5 ເຄື່ອງໃນສາງ

ເຄື່ອງໃນສາງສະແດງອອກ ຕາມລາຄາທີ່ຕ່ຳກວ່າລະຫວ່າງລາຄາຕົ້ນທຶນ ແລະ ລາຄາຂາຍອອກສຸດທິ. ຕົ້ນທຶນ ໄດ້ນຳໃຊ້ ວິທີສະເລ່ຍຕາມນ້ຳໜັກ. ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າທຳນຽມທີ່ກ່ຽວຂ້ອງກັບການນຳເຂົ້າ. ຄ່າຂົນສົ່ງ ລົບ ທຸກສ່ວນຫຼຸດທີ່ໄດ້ຮັບ. ລາຄາຂາຍອອກສຸດທິ ແມ່ນລາຄາ ທີ່ເຄື່ອງໃນສາງ ສາມາດຂາຍອອກໃນຮອບວຽນ ປົກກະຕິຂອງວິສາຫະກິດ ຫຼັງຈາກຫັກຕົ້ນທຶນໃນການຂາຍອອກ. ຄ່າສູນເສຍມູນຄ່າເກີດຂຶ້ນ. ກໍລະນີ ສິນຄ້າເຄື່ອນໄຫວຊ້າ ຫຼື ລ້າສະໄໝ. ເສຍຄຸນເຄື່ອງໃນສາງອື່ນໆ.

2.6 ທີ່ດິນ ແລະ ອຸປະກອນ

ຊັບສິນມີຕົວຕົນທັງໝົດ. ສິ່ງປຸກສ້າງ ແລະ ອຸປະກອນແມ່ນໄດ້ຖືກບັນທຶກຕາມຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມ ລວມມີລາຍຈ່າຍໂດຍກົງເພື່ອການໄດ້ມາຂອງລາຍການນັ້ນໆ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງທີ່ກ່ຽວກັບລາຍການຂອງຊັບສົມບັດຄົງທີ່ໄດ້ຖືກເພີ່ມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນ ເມື່ອ ມີຄວາມແນ່ໃຈວ່າຈະເກີດປະໂຫຍດທາງເສດຖະກິດໃນອານາຄົດເກີນກ່ວາການປະເມີນຜົນການດຳເນີນງານທີ່ມີຢູ່ ຂອງຊັບສິນ ເຂົ້າສູ່ບໍລິສັດ ແລະ ມູນຄ່າຕາມບັນຊີຂອງລາຍຈ່າຍດັ່ງກ່າວ ແມ່ນບໍ່ໄດ້ຮັບຮູ້. ຄ່າສ້ອມແປງ ແລະ ບຳລຸງ ຮັກສາ ແມ່ນຈະສະແດງໃນໃບລາຍງານຜົນໄດ້ຮັບໃນລະຫວ່າງໄລຍະທາງການເງິນ ເມື່ອລາຍການນັ້ນເກີດຂຶ້ນ.

ທີ່ດິນບໍ່ໄດ້ຄິດຄ່າຫລຸ້ຍຫ້ຽນ. ຄ່າຫລຸ້ຍຫ້ຽນແມ່ນໄດ້ຄິດໄລ່ໂດຍການຄິດໄລ່ຄ່າຫຼ້ຍຫ້ຽນບົນຫຼັກການ ການຄິດໄລ່ ແບບຄົງ ຕົວ, .ເພື່ອຈັດສັນກັບມູນຄ່າຍັງເຫຼືອ ຂອງແຕ່ລະລາຍການຊັບສິນຕາມອາຍຸການໃຊ້ງານທີ່ຄາດຄະເນມີດັ່ງຕໍ່ໄປນີ້:

	ປີ
ອາຄານ ແລະ ສ່ວນປັບປຸງທີ່ດິນ	30,20
ເຄື່ອງໃຊ້ຫ້ອງການ	3 – 5
ເຟີນີເຈີ ແລະ ສິ່ງທີ່ຕິດຕັ້ງຖາວອນ	2 – 10
ພາຫະນະ	2 – 5

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.6 ທີ່ດິນ ແລະ ອຸປະກອນ (ຕໍ່)

ມູນຄ່າຄົງເຫຼືອ ແລະ ອາຍຸການນຳໃຊ້ຂອງຊັບສິນແມ່ນໄດ້ຖືກກວດກາຄືນໃໝ່ ແລະ ປັບປຸງໃຫ້ເໝາະສົມໃນທ້າຍຂອງແຕ່ລະໄລຍະການລາຍງານ.

ມູນຄ່າຕາມບັນຊີຂອງຊັບສິນແມ່ນຖືກຈັດບັນທຶກທັນທີໃຫ້ເທົ່າກັບມູນຄ່າທີ່ສາມາດເກັບຄືນໄດ້ຖ້າມູນຄ່າຕາມບັນຊີຂອງຊັບສິນສູງກວ່າມູນຄ່າທີ່ຄາດຄະເນ ສາມາດເກັບຄືນໄດ້.

ກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກກຳນົດ ໂດຍການສົມທຽບ ຂັ້ນຕອນ ກັບມູນຄ່າຕາມບັນຊີ ແລະ ບັນທຶກ ໃນ (ຂາດທຶນ)/ກຳໄລ ສຸດທິ ໃນໃບລາຍງານຜົນໄດ້ຮັບ.

2.7 ຊັບສິນຄົງທີ່ບໍ່ມີຕົວຕົນ

2.7.1 ໂປແກຼມຄອມພິວເຕີ

ສິດທິການໃຊ້ໂປແກຼມຄອມພິວເຕີໂດຍທີ່ຊື້ມາແມ່ນຈະຖືກບັນທຶກເປັນຊັບສິນໂດຍຄິດໄລ່ຈາກຕົ້ນທຶນໃນການໄດ້ມາ ແລະ ການດຳເນີນການໃຫ້ໂປແກຼມຄອມພິວເຕີດັ່ງກ່າວນັ້ນສາມາດນຳມາໃຊ້ງານໄດ້ຕາມເປົ້າໝາຍ ແລະ ຈະຖືກຕັດຈ່າຍຕະຫຼອດອາຍຸປະເມີນການໃຫ້ປະໂຫຍດພາຍໃນໄລຍະເວລາ ສາມ ປີ. ຕົ້ນທຶນທີ່ກ່ຽວຂ້ອງກັບການບຳລຸງຮັກສາຂອງໂປແກຼມຄອມພິວເຕີແມ່ນຈະຖືກບັນທຶກເປັນລາຍຈ່າຍເມື່ອລາຍການດັ່ງກ່າວເກີດຂຶ້ນ.

2.8 ເງິນກູ້ຢືມ

ເງິນກູ້ຢືມ ຈະຖືກຮັບຮູ້ຕາມມູນຄ່າກູ້ຢືມເບື້ອງຕົ້ນຂອງເງິນທີ່ໄດ້ຮັບ.

ຄ່າທຳນຽມທີ່ຈ່າຍໄປສຳລັບການກູ້ຢືມຈະໄດ້ຮັບຮູ້ເປັນຕົ້ນທຶນຂອງເງິນກູ້ຢືມ ຕໍ່ເມື່ອມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ ໃນກໍລະນີນີ້ ຄ່າທຳນຽມ ແມ່ນຈະຖືກຮັບຮູ້ຈົນຮອດມື້ຖອນເງິນ ຫາກບໍ່ມີຫຼັກຖານທີ່ມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ ຄ່າທຳນຽມແມ່ນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍຈ່າຍລ່ວງໜ້າສຳລັບການໃຫ້ບໍລິການ ແລະ ຕັດຄ່າເຊື່ອມ ຕາມໄລຍະເວລາຂອງເງິນກູ້ຢືມທີ່ກ່ຽວຂ້ອງ.

ເງິນກູ້ຢືມນີ້ ແມ່ນຖືກຈັດປະເພດເປັນໜີ້ສິນໝຸນວຽນ ໂດຍການເຍື້ອນຊຳລະໜີ້ສິນ ຢ່າງໜ້ອຍ 12 ເດືອນ ຫຼັງຈາກມື້ໃນໃບລາຍງານຖານະການເງິນ.

2.8.1 ຕົ້ນທຶນເງິນກູ້ຢືມ

ຕົ້ນທຶນຂອງເງິນກູ້ຢືມທົ່ວໄປ ແລະ ສະເພາະ ທີ່ກ່ຽວຂ້ອງໂດຍກົງກັບການກໍ່ສ້າງ ຫຼື ການຜະລິດຂອງຊັບສິນທີ່ມີຄຸນສົມບັດຕາມກຳນົດ ເຊິ່ງເປັນຊັບສິນທີ່ຈຳເປັນຕ້ອງໃຊ້ໄລຍະເວລາພໍສົມຄວນໃນການກຽມໃຫ້ພ້ອມສຳລັບການໃຊ້ງານ ຫຼື ຂາຍ ຕາມວັດຖຸປະສົງ ຈະຖືກລວມເຂົ້າໃນຕົ້ນທຶນຂອງຊັບສິນດັ່ງກ່າວຈົນກວ່າຈະເຖິງເວລາທີ່ຊັບສິນມີຄວາມພ້ອມສຳລັບການໃຊ້ງານ ຫຼື ຂາຍ.

ລາຍໄດ້ຈາກການລົງທຶນທີ່ໄດ້ຮັບຈາກການລົງທຶນຊົ່ວຄາວຂອງເງິນກູ້ຢືມສະເພາະ ການໃຊ້ຈ່າຍໃນຊັບສິນທີ່ມີຄຸນສົມບັດຕາມກຳນົດແມ່ນຖືກຫັກອອກຈາກຕົ້ນທຶນເງິນກູ້ຢືມຢ່າງເໝາະສົມສຳລັບການບັນທຶກເຂົ້າເປັນຕົ້ນທຶນຂອງຊັບສິນ.

ຕົ້ນທຶນເງິນກູ້ຢືມອື່ນ ຈະຖືກຮັບຮູ້ເປັນລາຍຈ່າຍໃນງວດທີ່ເກີດຂຶ້ນ.

2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

2.9 ເງິນແຮ

ເງິນແຮ ຖືກບັນທຶກບັນຊີ ໃນເວລາມີພັນທະໃນປະຈຸບັນຕາມກົດໝາຍ ຫຼື ພັນທະການກໍ່ສ້າງ ເຊິ່ງເກີດຈາກເຫດການຜ່ານມາ. ເປັນໄປໄດ້ວ່າ ແຫຼ່ງຊັບພະຍາກອນຈະໄຫຼອອກເພື່ອສະສາງພັນທະ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້. ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ ອະທິບາຍຂໍ້ 2.12.

2.10 ການຮັບຮູ້ລາຍຮັບ

ລາຍຮັບໃນໃບເກັບເງິນຈາກການຂາຍສິນຄ້າສຸດທິຫຼັງຫັກສ່ວນຫຼຸດທີ່ໄດ້ຮັບ ແລະ ສ່ວນຫຼຸດຈາກການສັ່ງຊື້. ລາຍຮັບຈາກການຂາຍສິນຄ້າຮັບຮູ້ເມື່ອມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້.

ການຂາຍສິນຄ້າ ທີ່ມີການຕິດຕັ້ງ ແລະ ການກວດກາສະພາບຂອງສິນຄ້າ ແມ່ນໄດ້ຮັບຮູ້ເມື່ອຜູ້ຊື້ໄດ້ຮັບສິນຄ້າ. ການຕິດຕັ້ງ ແລະ ການກວດກາສຳເລັດ.

ລາຍຮັບຈາກການບໍລິການບຳລຸງຮັກສາແມ່ນຮັບຮູ້ເປັນລາຍຮັບເມື່ອການໃຫ້ບໍລິການແກ່ລູກຄ້າສຳເລັດສົມບຸນ.

ລາຍຮັບອື່ນໆແມ່ນຮັບຮູ້ອີງຕາມພື້ນຖານດັ່ງນີ້:

- ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ. ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກຳນົດ. ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
- ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

2.11 ອາກອນ

ບໍລິສັດ ບັນທຶກ ອາກອນລາຍໄດ້ ຕາມເກນຫຼັກຄ້າງຮັບຄ້າງຈ່າຍ. ບໍລິສັດ ບໍ່ໄດ້ບັນທຶກ ອາກອນລາຍໄດ້ຕ້ອງຈ່າຍ ຫຼື ຕ້ອງຮັບ ໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນພື້ນຖານຜົນການດຳເນີນງານໃນປີ ຫຼັງດັດແກ້ ບໍ່ຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ. ລາຍຈ່າຍອາກອນ ໃນປີ ແມ່ນໄດ້ຄິດໄລ່ຕາມພື້ນຖານລາຍຮັບຂອງບໍລິສັດ (ບົດອະທິບາຍ ຂໍ້ທີ 19).

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ໃນການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີທີ່ມີການກວດກາໄດ້ສຳເລັດ.

2.12 ຜົນປະໂຫຍດໃຫ້ພະນັກງານ

ອີງຕາມກົດໝາຍແຮງງານປະກັນສັງຄົມລົງວັນທີ 27 ມິຖຸນາ 2018 ແລະ ແຈ້ງການລົງວັນທີ 13 ສິງຫາ 2018. ບໍລິສັດ ແລະ ພະນັກງານ ຍັງໄດ້ປະກອບສ່ວນເງິນອຸດໜູນເຂົ້າອົງການປະກັນສັງຄົມ 6% ແລະ 5.5% ຂອງເງິນເດືອນພະນັກງານ. ເງິນເດືອນພື້ນຖານໃນແຕ່ລະເດືອນ ເປັນພື້ນຖານໃນການຄິດໄລ່. ແຕ່ບໍ່ເກີນ 4.5 ລ້ານກີບ.

ອີງຕາມກົດໝາຍ ເມື່ອພະນັກງານເຂົ້າບຳນານ ຫລື ບໍ່ເຖິງເກນໃນກົດໝາຍແຮງງານ. ສະນັ້ນບໍລິສັດຈະໄດ້ມີພັນທະດ້ານເງິນບຳນານຕໍ່ກັບພະນັກງານ.

ບໍ່ມີການຕັ້ງສຳຮອງເງິນສະຫວັດດີການໃຫ້ພະນັກງານພາຍໃນປີ. ໜີ້ຕ້ອງສົ່ງແມ່ນຖືກຮັບຮູ້ໃນເບື້ອງໃບສະຫລຸບຊັບສົມບັດ ແລະ ບັນດາລາຍຈ່າຍທີ່ກ່ຽວຂ້ອງແມ່ນຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບອີງຕາມຈຳນວນເກີດຂຶ້ນຕົວຈິງ.

3. ການບໍລິຫານຄວາມສ່ຽງທາງດ້ານການເງິນ

ປັດໄຈຄວາມສ່ຽງທາງດ້ານການເງິນ

ບໍລິສັດມີໜ້າທີ່ຕ້ອງຈຳກັດຄວາມສ່ຽງທາງດ້ານການເງິນ: ໂດຍທີ່ມີຜົນກະທົບພື້ນຖານໄດ້ແກ່ການປ່ຽນແປງຂອງອັດຕາແລກປ່ຽນ,ອັດຕາດອກເບ້ຍ. ຄວາມສ່ຽງສິນເຊື່ອ ແລະ ຄວາມສ່ຽງທາງດ້ານສະພາບຄ່ອງ.

ບໍລິສັດຕ້ອງບໍລິຫານຄວາມສ່ຽງທັງໝົດໂດຍທຽບຜົນກະທົບທາງລົບທີ່ອາດຈະເກີດຂຶ້ນໃນການດຳເນີນງານທາງການເງິນຂອງບໍລິສັດ ກັບການນຳໃຊ້ຕົ້ນທຶນທີ່ອາດເກີດຂຶ້ນຢ່າງມີປະສິດທິພາບ.

ການບໍລິຫານຄວາມສ່ຽງໂດຍທົ່ວໄປແມ່ນບໍລິຫານຈັດການພາຍໃຕ້ການດູແລກວດກາຈາກຄະນະຜູ້ອຳນວຍການ.

3.1 ຄວາມສ່ຽງທາງດ້ານອັດຕາແລກປ່ຽນ

ບໍລິສັດດຳເນີນກິດຈະການພາຍໃນປະເທດແຕ່ມີຄວາມສ່ຽງທາງດ້ານອັດຕາແລກປ່ຽນເກີດຂຶ້ນຈາກການຊື້ສິນຄ້າໃນສະກຸນເງິນບາດ. ນອກຈາກນີ້ ຄວາມສ່ຽງທາງດ້ານອັດຕາແລກປ່ຽນຍັງເກີດຈາກການເຄື່ອນໄຫວທາງດ້ານການຄ້າອື່ນໆ ແລະ ເງິນກູ້ຢືມ.

ຜູ້ບໍລິຫານພິຈາລະນາຄວາມສ່ຽງທາງດ້ານອັດຕາແລກປ່ຽນຈາກການເຄື່ອນໄຫວທາງດ້ານການຄ້າຢູ່ໃນລະດັບຕ່ຳເນື່ອງຈາກທາງບໍລິສັດນຳໃຊ້ການປ້ອງກັນຄວາມສ່ຽງຈາກການຊື້ ແລະ ການຂາຍໃນສະກຸນເງິນດຽວກັນ. ໂດຍກຳນົດລາຄາຂາຍເປັນສະກຸນເງິນບາດທີ່ເປັນສະກຸນດຽວກັນກັບຜູ້ສະໜອງສ່ວນໃຫຍ່ ແລະ ໄລຍະເວລາໃນການຊຳລະໜີ້ ແລະ ການເກັບເງິນຄືນແມ່ນບໍ່ແຕກຕ່າງກັນຢ່າງເປັນສາລະສຳຄັນ.

ໃນວັນທີ 31 ທັນວາ 2018. ຜູ້ບໍລິຫານບໍ່ມີນະໂຍບາຍເປັນທາງການ ແລະ ບໍ່ມີການນຳໃຊ້ເຄື່ອງມືທາງດ້ານການເງິນ ຫຼື ເຄື່ອງມືອື່ນໆໃນການບໍລິຫານຄວາມສ່ຽງທາງດ້ານອັດຕາແລກປ່ຽນຈາກເງິນກູ້ຢືມເປັນເງິນບາດ. ແນວໃດກໍຕາມ. ຜູ້ບໍລິຫານແມ່ນໄດ້ຕິດຕາມການເຄື່ອນໄຫວຂອງອັດຕາແລກປ່ຽນເງິນຕາຕ່າງປະເທດໃນເວລາທີ່ເໝາະສົມ ແລະ ອາດຈະໃຊ້ເຄື່ອງມືທາງດ້ານການເງິນ ຫຼື ເຄື່ອງມືອື່ນໆເພື່ອບໍລິຫານຄວາມສ່ຽງດັ່ງກ່າວຖ້າຫາກວ່າຜູ້ບໍລິຫານເຫັນວ່າມີຄວາມສຳຄັນ. ດັ່ງນັ້ນ. ການປ່ຽນແປງຂອງອັດຕາແລກປ່ຽນອາດມີ ເປັນສ່ວນສຳຄັນທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຂອງບໍລິສັດ. ຜົນການດຳເນີນງານ. ເງື່ອນໄຂທາງດ້ານການເງິນ ແລະ ໂອກາດຕ່າງໆ.

3.2 ຄວາມສ່ຽງທາງດ້ານສິນເຊື່ອ

ບໍລິສັດ ບໍ່ມີຄວາມສ່ຽງຢ່າງເປັນສາລະສຳຄັນໃນດ້ານສິນເຊື່ອຈາກບໍລິສັດດຳເນີນກິດຈະການທຸລະກິດຂາຍຍ່ອຍ. ຊຶ່ງທາງກຸ່ມ ບໍລິສັດ ມີນະໂຍບາຍທີ່ຈະເຮັດໃຫ້ແນ່ໃຈວ່າຍອດຂາຍ ຜະລິດຕະພັນ ແລະ ການໃຫ້ ບໍລິການ ທີ່ມອບໃຫ້ແກ່ລູກຄ້າທີ່ມີປະຫວັດທາງສິນເຊື່ອໂດຍຄຳນຶ່ງເຖິງຄວາມເໝາະສົມດັ່ງກ່າວແລ້ວ.

3.3 ຄວາມສ່ຽງທາງດ້ານອັດຕາດອກເບ້ຍ

ທາງບໍລິສັດບໍ່ມີສິນຊັບທີ່ຕ້ອງອ້າງອີງອັດຕາດອກເບ້ຍຢ່າງມີໄລຍະສຳຄັນ. ແຕ່ຄວາມສ່ຽງທາງດ້ານອັດຕາແລກປ່ຽນທີ່ເກີດຈາກການກູ້ຢືມ ໃນອັດຕາດອກເບ້ຍຕາມລາຄາຕະຫຼາດ ບໍລິສັດ ໄດ້ລຸດຄວາມສ່ຽງໂດຍການກູ້ຢືມເງິນໄລຍະສັ້ນ ຊຶ່ງຜູ້ບໍລິຫານເຊື່ອວ່າ ຜົນກະທົບຈາກການປ່ຽນແປງໃນອັດຕາດອກເບ້ຍ ຈະບໍ່ສົ່ງຜົນກະທົບຕໍ່ກັບບໍລິສັດຢ່າງເປັນສາລະສຳຄັນ.

3. ການບໍລິຫານຄວາມສ່ຽງທາງດ້ານການເງິນ (ຕໍ່)

3.4 ຄວາມສ່ຽງທາງດ້ານສະພາບຄ່ອງ

ການບໍລິຫານຄວາມສ່ຽງທາງດ້ານສະພາບຄ່ອງແມ່ນເວົ້າເຖິງຄວາມພຽງພໍຂອງເງິນສົດ ແລະ ການລົງທຶນໄລຍະສັ້ນ. ການວາງແຜນການບໍລິຫານແມ່ນເພື່ອຮັກສາເງິນສົດທີ່ໃຊ້ເພື່ອຮັກສາສະພາບຄ່ອງ ແລະ ເຮັດໃຫ້ໝັ້ນໃຈວ່າທຶນຈະມີຄວາມພຽງພໍຕໍ່ກັບຄວາມຕ້ອງການນຳໃຊ້ໃນໄລຍະສັ້ນເຊິ່ງຈະປະກອບດ້ວຍການຈ່າຍເງິນກູ້ຢືມ ແລະ ແຜນການລົງທຶນໄລຍະຍາວ.

3.5 ການບໍລິຫານຄວາມສ່ຽງຂອງທຶນ

ການບໍລິຫານຄວາມສ່ຽງຂອງທຶນເພື່ອການຄຸ້ມຄອງທຶນ ໂດຍມີວັດຖຸປະສົງ ໃຫ້ທຶນຢູ່ໃນລະດັບປອດໄພ ແລະ ເຮັດໃຫ້ມີຄວາມອາດສາມາດດຳເນີນງານຢ່າງຕໍ່ເນື່ອງ ແລະ ໃຫ້ມີຜົນປະໂຫຍດໃຫ້ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ແລະ ສືບຕໍ່ຮັກສາໂຄງສ້າງຂອງທຶນເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍຂອງການຈັດຫາທຶນ.

ເພື່ອທີ່ຈະຮັກສາ ຫຼື ປັບປຸງ ໂຄງສ້າງທຶນ ໃຫ້ສະດວກໃນການດຳເນີນງານ ແລະ ແຜນການລົງທຶນ. ບໍລິສັດ ອາດອອກຮຸ້ນໃໝ່. ຄືນເງິນທຶນໃຫ້ແກ່ຜູ້ຖືຮຸ້ນ ແລະ ດັດແກ້ຈຳນວນເງິນປັນຜົນທີ່ຈະຈ່າຍໃຫ້ຜູ້ຖືຮຸ້ນ ໃນອະນາຄົດ.

4. ການດັດແກ້ຂໍ້ຜິດພາດ

ໃນປີ 2018, ຜູ້ບໍລິຫານໄດ້ມີການກວດຄືນ ການຄິດໄລ່ຕົ້ນທຶນຕໍ່ໜ່ວຍຂອງສິນຄ້າບາງປະເພດ ແລະ ພົບເຫັນການຄິດໄລ່ທີ່ບໍ່ຖືກຕ້ອງ ການກວດຄືນໃໝ່ນີ້ກະທົບຍອດເຫຼືອຂອງສິນຄ້າ ໃນວັນທີ 31 ທັນວາ 2017 ເຊິ່ງສະແດງຍອດສູງເກີນ 1.471 ລ້ານກີບ ແລະ ກະທົບລາຍໄດ້ ສະແດງຍອດສູງເກີນໂດຍຈຳນວນທີ່ເທົ່າກັນ.

ຜູ້ບໍລິຫານ ຕັດສິນໃຈດັດແກ້ຄືນຍອດເຫຼືອໃນວັນທີ 31 ທັນວາ 2017 ໂດຍເຊື່ອວ່າ ຈະເຮັດໃຫ້ການນຳສະເໜີໃນໃບລາຍງານຖານະການເງິນ ແລະ ໃບລາຍງານຜົນໄດ້ຮັບ ໄດ້ດີຂຶ້ນ.

ຂໍ້ຜິດພາດໄດ້ຖືກແກ້ໄຂໂດຍການດັດແກ້ຄືນ ຕາມແຕ່ລະປະເພດຂອງລາຍການທີ່ຖືກກະທົບໃນເອກະສານລາຍງານການເງິນຂອງປີຜ່ານມາໂດຍສະແດງດັ່ງຕໍ່ໄປນີ້:

	ໃນວັນທີ 31 ທັນວາ 2017		
	ຍອດເຫຼືອຂອງປີຜ່ານ	ເພີ່ມຂຶ້ນ/ (ຫຼຸດລົງ)	ຍອດດັດແກ້
ໃບລາຍງານຖານະການເງິນ (ບາງສ່ວນ)			
ຊັບສິນ			
ສິນຄ້າໃນສາງ, ສຸດທິ	149.188.890.866	(1.471.245.030)	147.717.645.836
ລວມຊັບສິນ	149.188.890.866	(1.471.245.030)	147.717.645.836
ທຶນ			
ກຳໄລສະສົມ	150.496.317.879	(1.471.245.030)	149.025.072.849
ລວມທຶນ	150.496.317.879	(1.471.245.030)	149.025.072.849

4. ການດັດແກ້ຂໍ້ຜິດພາດ (ຕໍ່)

	ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017		
	ຍອດເຫຼືອຂອງປີຜ່ານ	ເພີ່ມຂຶ້ນ/ (ຫຼຸດລົງ)	ຍອດດັດແກ້
ໃບລາຍງານຜົນໄດ້ຮັບ (ບາງສ່ວນ)			
ຕົ້ນທຶນໃນການຂາຍ	247.127.994.090	1.471.245.030	248.599.239.120
ກຳໄລຂັ້ນຕົ້ນ	52.770.609.153	(1.471.245.030)	51.299.364.123
ກຳໄລສຸດທິໃນປີ	4.260.029.000	(1.471.245.030)	2.788.783.970

5. ປ່ຽນແປງການນຳສະເໜີ

ຈຳນວນທີ່ກ່ຽວຂ້ອງກັບເງິນສົດ ແລະ ລາຍການທຽບເທົ່າເງິນສົດຂອງໃບລາຍງານຖານະການເງິນໃນວັນທີ 31 ທັນວາ 2017 ແມ່ນໄດ້ຖືກຈັດປະເພດຄືນໃໝ່ເພື່ອໃຫ້ສອດຄ່ອງກັບການຈັດປະເພດໃນປີປະຈຸບັນ.

ຜູ້ບໍລິຫານເຊື່ອວ່າການຈັດປະເພດຄືນໃໝ່ຈະເຮັດໃຫ້ການນຳສະເໜີໃບລາຍງານຖານະການເງິນດີຂຶ້ນ. ການຈັດປະເພດຄືນໃໝ່ມີດັ່ງຕໍ່ໄປນີ້:

ໃບລາຍງານຖານະການເງິນໃນວັນທີ 31 ທັນວາ 2017

	ການຈັດປະເພດຂອງປີຜ່ານມາ ກີບ	ການຈັດປະເພດ ກີບ	ການຈັດປະເພດຂອງປີປະຈຸບັນ ກີບ
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	7.825.563.835	(1.406.529.387)	6.419.034.448
ຊັບສິນບໍ່ໝຸນວຽນອື່ນໆ	-	1.406.529.387	1.406.529.387
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ສຸດທິ	41.677.587.933	1.604.134.667	43.281.722.600
ໜີ້ສິນໝຸນວຽນອື່ນໆ	7.996.658.217	(1.604.134.667)	6.392.523.550

6. ປ່ຽນແປງໃນການປະເມີນການບັນຊີ

6.1 ຊັບສິນຄົງທີ່ມີຕົວຕົນ

ໃນເດືອນ ມັງກອນ 2018 ໄດ້ປ່ຽນແປງອາຍຸການໃຊ້ງານຂອງຊັບສິນ 3 ປະເພດ ຄື: ອາຄານ, ການປັບປຸງທີ່ດິນ ແລະ ເຟີນີເຈີ ແລະ ສິ່ງຕິດຕັ້ງ ຈາກອາຍຸການໃຊ້ງານ 20,10 ແລະ 5 ປີ ໃມເປັນ 30,20 ແລະ 10 ປີ ຕາມລຳດັບ. ວິທີການຫັກຄ່າຫຼ້ຍຫ້ຽນແມ່ນຫັກແບບສະໝ່ຳສະເໝີ ເຊິ່ງສອດຄ່ອງກັບປີຜ່ານມາ.

ບໍລິສັດ ບັນທຶກລາຍການເຄື່ອນໄຫວຂອງການຫັກຄ່າຫຼ້ຍຫ້ຽນນີ້ແມ່ນບັນທຶກໄປຂ້າງໜ້ານັບແຕ່ເດືອນມັງກອນ 2018 ແລະ ສຳລັບ ເອກະສານລາຍງານການເງິນ ໃນວັນທີ 31 ທັນວາ 2018 ໄດ້ຮັບຜົນກະທົບດັ່ງລຸ່ມນີ້:

	ມູນຄ່າຕາມບັນຊີຕາມອາຍຸການໃຊ້ງານ		
	ປະເມີນປີຜ່ານມາ	**ປະເມີນປີປະຈຸບັນ**	**ຄວາມແຕກຕ່າງ**
	ກີບ	**ກີບ**	**ກີບ**
ໃບລາຍງານຖານະການເງິນ (ບາງສ່ວນ)			
ອາຄານ (ລາຄາຕົ້ນທຶນ)	155.276.367.944	155.276.367.944	-
ຜົນຕ່າງຈາກການແປງຄ່າງເງິນຕາຕ່າງປະເທດ	(70.481.966)	(45.310.479)	(25.171.487)
ຫັກ: ຄ່າຫຼ້ຍຫ້ຽນສະສົມ - ອາຄານ	(24.907.416.858)	(22.430.185.600)	(2.477.231.258)
ມູນຄ່າຕາມບັນຊີ - ອາຄານ	130.298.469.120	132.800.871.865	(2.502.402.745)
ການປັບປຸງທີ່ດິນ (ລາຄາຕົ້ນທຶນ)	9.648.574.350	9.648.574.350	-
ຜົນຕ່າງຈາກການແປງຄ່າງເງິນຕາຕ່າງປະເທດ	(8.414.583)	(5.634.126)	(2.780.457)
ຫັກ: ຄ່າຫຼ້ຍຫ້ຽນສະສົມ – ການປັບປຸງທີ່ດິນ	(1.253.321.964)	(979.685.559)	(273.636.405)
ມູນຄ່າຕາມບັນຊີ – ການປັບປຸງທີ່ດິນ	8.386.837.803	8.663.254.665	(276.416.862)
ເຟີນີເຈີ ແລະ ສິ່ງຕິດຕັ້ງ (ລາຄາຕົ້ນທຶນ)	15.412.713.333	15.412.713.333	-
ຜົນຕ່າງຈາກການແປງຄ່າງເງິນຕາຕ່າງປະເທດ	(17.928.964)	(15.215.582)	(2.713.382)
ຫັກ: ຄ່າຫຼ້ຍຫ້ຽນສະສົມ – ເຟີນີເຈີ ແລະ ສິ່ງຕິດຕັ້ງ	(4.142.665.895)	(3.875.630.625)	(267.035.270)
ມູນຄ່າຕາມບັນຊີ – ເຟີນີເຈີ ແລະ ສິ່ງຕິດຕັ້ງ	11.252.118.474	11.521.867.126	(269.748.652)

6. ປ່ຽນແປງໃນການປະເມີນການບັນຊີ (ຕໍ່)

6.1 ຊັບສິນຄົງທີ່ມີຕົວຕົນ (ຕໍ່)

	ມູນຄ່າຕາມບັນຊີຕາມອາຍຸການໃຊ້ງານ		
	ປະເມີນປີຜ່ານມາ ກີບ	ປະເມີນປີປະຈຸບັນ ກີບ	ຄວາມແຕກຕ່າງ ກີບ
ໃບລາຍງານຜົນໄດ້ຮັບລວມ (ບາງສ່ວນ)			
ຄ່າຫຼ້ຍຫ້ຽນ - ອາຄານ	6.936.424.814	4.459.193.556	2.477.231.258
ຄ່າຫຼ້ຍຫ້ຽນ - ການປັບປຸງທີ່ດິນ	828.114.338	554.477.933	273.636.405
ຄ່າຫຼ້ຍຫ້ຽນ - ເຟີນີເຈີ ແລະ ສິ່ງຕິດຕັ້ງ	1.764.464.290	1.497.429.020	267.035.270

ຄ່າຫຼ້ຍຫ້ຽນ ຂອງຊັບສິນທີ່ໄດ້ປ່ຽນແປງອາຍຸການໃຊ້ງານຕາມການປະເມີນປີປະຈຸບັນສາມາດສະແດງສຳລັບປີສິ້ນສຸດດັ່ງລຸ່ມນີ້:

- ຄ່າຫຼ້ຍຫ້ຽນ ອາຄານ 6.936 ລ້ານກີບ
- ຄ່າຫຼ້ຍຫ້ຽນ - ການປັບປຸງທີ່ດິນ 828 ລ້ານກີບ
- ຄ່າຫຼ້ຍຫ້ຽນ - ເຟີນີເຈີ ແລະ ສິ່ງຕິດຕັ້ງ 1.764 ລ້ານກີບ

7. ການປະເມີນ. ຂໍ້ສົມມຸດຕິຖານ ແລະ ການປັບປຸງທາງການບັນຊີທີ່ສຳຄັນ

ການປະເມີນ. ຂໍ້ສົມມຸດຕິຖານ ແລະ ການປັບປຸງທາງການບັນຊີທີ່ສຳຄັນ ແມ່ນໄດ້ດຳເນີນການຢ່າງຕໍ່ເນື່ອງ ແລະ ຢູ່ເທິງພື້ນຖານປະສົບການທີ່ຜ່ານມາ ແລະ ປັດໄຈສຳຄັນອື່ນໆ ລວມເຖິງການຄາດຫວັງເຫດການໃນອານາຄົດທີ່ເຊື່ອວ່າ ຈະສົມເຫດສົມຜົນໃນສະຖານະການໃນຕອນນັ້ນ.

ບໍລິສັດ ໄດ້ປະເມີນ ແລະ ກຳນົດຂໍ້ສົມມຸດຕິຖານ ທີ່ກ່ຽວກັບອານາຄົດ. ຜົນການປະເມີນການບັນຊີຈະບໍ່ເປັນໄປຕາມຜົນທີ່ເກີດຂຶ້ນຈິງ. ການປະເມີນ ແລະ ຂໍ້ສົມມຸດຕິຖານ ທີ່ມີຄວາມສ່ຽງທີ່ເປັນສາລະສຳຄັນຕໍ່ກັບການດັດແກ້ມູນຄ່າຕາມບັນຊີຂອງຊັບສິນ ແລະ ໜີ້ສິນ ໃນການເງິນປີຕໍ່ໄປມີດັ່ງຕໍ່ໄປນີ້:

7.1 ຄ່າເຊື່ອມມູນຄ່າຂອງໜີ້ຕ້ອງຮັບຈາກລູກຄ້າ

ທາງ ບໍລິສັດ ໄດ້ກຳນົດຄ່າເຊື່ອມໜີ້ສົງໄສຈະເສຍທີ່ຈະສະທ້ອນໃຫ້ເຫັນເຖິງຄ່າເຊື່ອມມູນຄ່າຂອງໜີ້ຕ້ອງຮັບຈາກລູກຄ້າ ທີ່ກ່ຽວຂ້ອງກັນກັບເງິນສຳຮອງຂາດທຶນຈາກການຮຽກເກັບເງິນກັບລູກຄ້າ ຄ່າເຊື່ອມໜີ້ສົງໄສຈະເສຍອັນເປັນຜົນມາຈາກການປະເມີນເງິນສົດທີ່ຄາດວ່າຈະໄດ້ຮັບໃນອານາຄົດຂອງ ບໍລິສັດ ເຊິ່ງການປະເມີນການແມ່ນຢູ່ເທິງພື້ນຖານປະສົບການທີ່ຜ່ານມາໃນການຮຽກເກັບເງິນຈາກລູກຄ້າໂດຍຄວາມມີຊື່ສຽງ. ແລະ ການຜິດນັດໃນການຊຳລະໜີ້ໂດຍຈະພິຈາລະນາຕາມແນວໂນ້ມຂອງຕະຫຼາດ.

7.2 ຄ່າເຊື່ອມມູນຄ່າຂອງສິນຄ້າໝຸດລົງ

ທາງ ບໍລິສັດ ໄດ້ປະເມີນການຄ່າເຊື່ອມມູນຄ່າຂອງສິນຄ້າໝຸດລົງ ເພື່ອສະທ້ອນໃຫ້ເຫັນເຖິງມູນຄ່າສຸດທິ ທີ່ຄາດວ່າຈະໄດ້ຮັບຂອງສິນຄ້າຄ້າງສາງ ໂດຍຝ່າຍ ຜູ້ບໍລິຫານ ໄດ້ໃຊ້ການປະເມີນການໂດຍການວິເຄາະຄວາມຫຼ້າສະໄໝຂອງສິນຄ້າ ແລະ ການຄາດການທີ່ກ່ຽວກັບການຂາຍສິນຄ້າໃນອານາຄົດ. ຍອດເຫຼືອຂອງສິນຄ້າຄ້າງສາງແມ່ນຈະຖືກຕັດອອກທາງບັນຊີ ເມື່ອຮັບຮູ້ວ່າ ສິນຄ້າດັ່ງກ່າວແມ່ນ ໄດ້ເຊື່ອມສະພາບ ຫຼື ບໍ່ສາມາດຂາຍໄດ້.

7. ການປະເມີນ, ຂໍ້ສົມມຸດຕິຖານ ແລະ ການປັບປຸງທາງການບັນຊີທີ່ສຳຄັນ (ຕໍ່)

7.3 ຊັບສົມບັດຄົງທີ່ມີຕົວຕົນ

ຜູ້ບໍລິຫານ ແມ່ນຜູ້ປະເມີນການອາຍຸການນຳໃຊ້ຂອງ ຕຶກອາຄານ ແລະ ອຸປະກອນຂອງ ບໍລິສັດ. ຜູ້ບໍລິຫານ ຈະມີການກວດສອບຄ່າເຊື່ອມມູນຄ່າ ເມື່ອ ອາຍຸການນຳໃຊ້ມີຄວາມແຕກຕ່າງໄປຈາກການປະເມີນການໃນຄັ້ງທີ່ຜ່ານມາ ຫຼື ມີການຕັດຈຳໜ່າຍຊັບສົມບັດທີ່ເຊື່ອມສະພາບ ຫຼື ບໍ່ສາມາດໃຊ້ງານໂດຍການຂາຍ ຫຼື ເລີກໃຊ້.

8. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2018 ກີບ	2017 (ຄັດແກ້) ກີບ
ເງິນສົດໃນມື	891.617.104	1.841.487.603
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	7.982.029.840	4.577.546.845
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	8.873.646.944	6.419.034.448

ເງິນສົດໃນມືແມ່ນເງິນທີ່ພ້ອມຈ່າຍ ແລະ ເງິນທີ່ໄດ້ຈາກການຂາຍທີ່ໃຊ້ໄວ້ເພື່ອການໃຊ້ຈ່າຍທົ່ວໄປ.

ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບ ສະຖາບັນການເງິນ ໝາຍເຖິງ ເງິນຝາກກັບທະນາຄານທີ່ມີຊື່ສຽງພາຍໃນປະເທດໃນ 3 ສະກຸນເງິນ ໂດລາສະຫະລັດ, ບາດ ແລະ ກີບ ໃນບັນຊີກະແສລາຍວັນ ທີ່ມີອັດຕາດອກເບ້ຍແຕ່ 1,89%-2,0% ຕໍ່ປີ (2017: 1,5%-2,5% ຕໍ່ປີ).

9. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ

	2018 ກີບ	2017 ກີບ
ໜີ້ຕ້ອງຮັບການຄ້າ	15.777.824.422	17.135.409.288
ຫັກ ສຳຮອງໜີ້ສົງໄສຈະເສຍ	(1.088.932.900)	(1.237.731.102)
ໜີ້ຕ້ອງຮັບການຄ້າ ສຸດທິ	14.688.891.522	15.897.678.186
ເງິນກູ້ຢືມພະນັກງານ	45.493.253	72.341.226
ໜີ້ຕ້ອງຮັບອື່ນໆ	1.024.960.053	1.668.511.668
	1.070.453.306	1.740.852.894
ລວມໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	15.759.344.828	17.638.531.080

9. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ (ຕໍ່)

ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ທັນວາ 2018 ມີອາຍຸການດັ່ງລຸ່ມນີ້:

	2018 ກີບ	2017 ກີບ
ບໍ່ຄົບກຳນົດ	3.813.529.908	6.732.514.175
ເກີນກຳນົດ		
1 - 3 ເດືອນ	6.422.471.137	5.950.058.870
3 - 6 ເດືອນ	448.036.210	1.113.741.345
6 - 12 ເດືອນ	2.152.090.284	124.260.914
ເກີນ 12 ເດືອນ	2.941.696.883	1.147.319.406
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	15.777.824.422	17.135.409.288
ຫັກ ສຳຮອງໜີ້ສົງໃສຈະເສຍ	(1.088.932.900)	(1.237.731.102)
ໜີ້ຕ້ອງຮັບການຄ້າ ສຸດທິ	14.688.891.522	15.897.678.186

ໜີ້ຕ້ອງຮັບການຄ້າທີ່ມີອາຍຸເກີນ 6 ເດືອນສ່ວນໃຫຍ່ເປັນໜີ້ຕ້ອງຮັບທີ່ຍັງຄົງມີການຊື້ຂາຍ ກັບບໍລິສັດຢ່າງຕໍ່ເນື່ອງ ການຕັ້ງສຳຮອງໜີ້ສົງໃສຈະເສຍ ອີງຕາມ (i) ຍອດໜີ້ຕ້ອງຮັບຄ້າງຊຳລະເກີນ 6 ເດືອນ ຫຼັງຈາກຄົບກຳນົດທີ່ຍັງບໍ່ໄດ້ຮັບຊຳລະ ແລະ (ii) ໄດ້ຮັບການປະເມີນຈາກ ຜູ້ບໍລິຫານໃນເລື່ອງ ການຊ□າລະຂອງບັນຊີໜີ້ຕ້ອງຮັບຄືນຫຼັງ ແລະ ຄາດຄະເນກ່ຽວກັບການເກັບເງິນຄືນຈາກໜີ້ຕ້ອງຮັບການຄ້າໃນອານາຄົດ. ໃນປີ 2019 ໜີ້ຕ້ອງຮັບທີ່ມີອາຍຸເກີນ 6 ເດືອນ ຈຳນວນ 1.573 ລ້ານກີບ ໄດ້ຖືກຊຳລະແລ້ວ. ຜູ້ບໍລິຫານເຊື່ອວ່າຈຳນວນເຫຼົ່ານີ້ ມີແນວໂນ້ມສູງທີ່ຈະເກັບເງິນຄືນໄດ້ພາຍໃນປີຕໍ່ໄປ.

10. ສິນຄ້າໃນສາງສຸດທິ

	2018 ກີບ	2017 (ດັດແກ້) ກີບ
ກະເບື້ອງ ແລະ ວັດສະດຸກໍ່ສ້າງ	52.071.257.040	32.587.854.401
ເຄື່ອງສຸຂະພັນ ແລະ ກອັກນ້ຳ	34.257.653.349	28.597.747.335
ລິບ ແລະ ບັນໄດເລື່ອນ	32.739.267.081	32.550.126.905
ຫຼັງຄາ ແລະ ອຸປະກອນຕົບແຕ່ງ	29.724.537.549	12.594.428.294
ສ.ເຄື່ອງມື ແລະ ອຸປະກອນໄຟຟ້າ	44.088.791.967	44.972.138.233
ອື່ນໆ	2.000.157.513	1.464.678.596
ຫັກ: ຄ່າເຊື່ອມມູນຄ່າສິນຄ້າເຄື່ອນໄຫວຊ້າ	(979.921.185)	(2.460.191.459)
ຄ່າເຊື່ອມມູນຄ່າໂດຍຂຶ້ນກັບມູນຄ່າສຸດທິທີ່ຈະໄດ້ຮັບ	(1.357.335.033)	(2.589.136.469)
ສິນຄ້າໃນສາງ ສຸດທິ	192.544.408.281	147.717.645.836

ຕົ້ນທຶນຂອງສິນຄ້າໃນສາງຖືກຮັບຮູ້ເປັນລາຍຈ່າຍ ແລະ ລວມຢູ່ໃນ 'ຕົ້ນທຶນການຂາຍ' ເປັນຈຳນວນເງິນ 283.844 ລ້ານກີບ (ໃນປີ 2017: 248.468 ລ້ານກີບ).

10. ສິນຄ້າໃນສາງ. ສຸດທິ (ຕໍ່)

ໃນວັນທີ 31 ທັນວາ 2018, ຜູ້ບໍລິຫານໄດ້ປະເມີນ ແລະ ທົບທວນຄືນການສຳຮອງເງິນແຮສຳລັບ ເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ລ້າສະໄໝ, ເງິນແຮສຳລັບເຄື່ອງໃນສາງທີ່ເຄື່ອໄຫວຊ້າ ແລະ ລ້າສະໄໝໃນອະດີດ ແມ່ນໄດ້ດັດແກ້ໃຫ້ຫຼຸດລົງ ເປັນ ຈຳນວນເງິນ 2.337 ລ້ານກີບ (ໃນປີ 2017: 2.402 ລ້ານກີບ) ເນື່ອງຈາກ ສາມາດຂາຍໄດ້ຫຼາຍຂຶ້ນ ຊຶ່ງສູງກວ່າທີ່ຄາດຄະເນ ໄວ້, ຜົນຈາກການປັບຫຼຸດ ດັ່ງກ່າວ ເຮັດໃຫ້ເງິນແຮ ແລະ ຕົ້ນທຶນຂາຍ ຖືກປັບໃຫ້ຫຼຸດລົງ ເພື່ອໃຫ້ສອດຄ່ອງກັບຄວາມເປັນຈິງ ແລະ ການວິເຄາະຂ້າງເທິງ.

11. ຊັບສິນໝຸນວຽນອື່ນໆ

	2018 ກີບ	2017 ກີບ
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	453.845.505	5.088.565.200
ເງິນຈ່າຍລ່ວງໜ້າຄ່າປະກັນໄພ	96.869.874	89.167.259
ສ່ວນຫຼຸດຄ້າງຮັບຈາກຜູ້ສະໜອງສິນຄ້າ (i)	4.470.733.071	2.311.856.526
ຊັບສິນໝຸນວຽນອື່ນໆ (ii)	707.870.487	277.947.380
ຊັບສິນໝຸນວຽນອື່ນໆ	5.729.318.937	7.767.536.365

(i) ສ່ວນຫຼຸດຈາກຜູ້ສະໜອງສະແດງໃຫ້ເຫັນຍອດສ່ວນຫຼຸດຍັງຄ້າງຮັບທີ່ຜູ້ສະໜອງໄດ້ຢືນຢັນຍອດມາ ແລະ ຈະໄດ້ຮັບຊຳ ລະໂດຍການຫັກຈາກເງິນທີ່ຈ່າຍໜີ້ ຫຼື ໄດ້ຮັບເງິນສົດ ສ່ວນຫຼຸດໃນວັນທີ 31 ທັນວາ 2018 ສ່ວນຫຼາຍຈະໄດ້ຮັບຊຳ ລະພາຍໃນໄຕມາດທຳອິດຂອງປີ 2019.

(ii) ອື່ນໆ ສ່ວນໃຫຍ່ປະກອບມີ ຈ່າຍລ່ວງໜ້າຄ່າເຊົ່າບ້ານໃຫ້ພະນັກງານ.

12. ທີ່ດິນ ອາຄານ ແລະ ອຸປະກອນ.ສຸດທິ

	ທີ່ດິນ	ອາຄານ ແລະ ສ່ວນປັບປຸງທີ່ດິນ	ເຄື່ອງໃຊ້ຫ້ອງການ	ເຟີນີເຈີ ແລະ ສິ່ງຕິດຕັ້ງຖາວອນ	ພາຫະນະ	ລະຫວ່າງການກໍ່ສ້າງ	ລວມ
	ກີບ	ກີບ	ກີບ	ກີບ	ກີບ	ກີບ	ກີບ
ໃນວັນທີ 31 ທັນວາ 2017							
ຕົ້ນທຶນ	267.896.239.572	73.711.298.190	4.047.911.075	5.694.072.221	7.054.981.839	51.413.301.626	409.817.804.523
ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ	(13.424.830.015)	671.598.079	(77.212.174)	(99.040.731)	(9.966.776)	7.994.492	(12.931.457.125)
ຫັກ ຄ່າຫຼ້ຍຫ້ຽນສະສົມ	-	(10.695.917.126)	(2.383.932.968)	(3.738.915.885)	(3.858.888.767)	-	(20.677.654.746)
ມູນຄ່າຕາມບັນຊີສຸດທິ	254.471.409.557	63.686.979.143	1.586.765.933	1.856.115.605	3.186.126.296	51.421.296.118	376.208.692.652
ທ້າຍປີ ວັນທີ 31 ທັນວາ 2017							
ຍອດຍົກມາຕາມບັນຊີສຸດທິ	254.471.409.557	63.686.979.143	1.586.765.933	1.856.115.605	3.186.126.296	51.421.296.118	376.208.692.652
ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ	28.534.906.587	7.141.477.330	177.930.572	208.133.745	357.273.428	5.766.077.642	42.185.799.304
ການເພີ່ມຂຶ້ນ	-	-	662.783.075	602.187.821	3.001.203.325	47.922.835.698	52.189.009.919
ການໂອນເຂົ້າ (ອອກ)	-	50.788.774.252	-	12.469.271.307	4.788.999.491	(68.047.045.050)	-
ການຕັດ-ຕົ້ນທຶນ	-	-	(260.498)	(834.510)	(344.101.500)	-	(345.196.508)
ການຕັດ-ຄ່າຫຼ້ຍຫ້ຽນ	-	-	28.293	834.510	344.101.500	-	344.964.303
ຄ່າຫຼ້ຍຫ້ຽນ	-	(5.622.384.521)	(497.701.782)	(2.019.636.208)	(2.093.558.132)	-	(10.233.280.643)
ຍອດເຫຼືອຕາມບັນຊີສຸດທິ	283.006.316.144	115.994.846.204	1.929.545.593	13.116.072.270	9.240.044.408	37.063.164.408	460.349.989.027
ໃນວັນທີ 31 ທັນວາ 2017							
ຕົ້ນທຶນ	267.896.239.572	124.500.072.442	4.710.433.652	18.764.696.839	14.501.083.155	31.289.092.274	461.661.617.934
ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ	15.110.076.572	7.813.075.409	100.718.398	109.093.014	347.306.652	5.774.072.134	29.254.342.179
ຫັກ ຄ່າຫຼ້ຍຫ້ຽນສະສົມ	-	(16.318.301.647)	(2.881.606.457)	(5.757.717.583)	(5.608.345.399)	-	(30.565.971.086)
ມູນຄ່າຕາມບັນຊີສຸດທິ	283.006.316.144	115.994.846.204	1.929.545.593	13.116.072.270	9.240.044.408	37.063.164.408	460.349.989.027

12. ທີ່ດິນ ອາຄານ ແລະ ອຸປະກອນ.ສຸດທິ (ຕໍ່)

	ທີ່ດິນ	ອາຄານ ແລະ ສ່ວນປັບປຸງທີ່ດິນ	ເຄື່ອງໃຊ້ຫ້ອງການ	ເຟີນີເຈີ ແລະ ສິ່ງຕິດຕັ້ງ ຖາວອນ	ພາຫະນະ	ລະຫວ່າງການກໍ່ສ້າງ	ລວມ
	ກີບ	ກີບ	ກີບ	ກີບ	ກີບ	ກີບ	ກີບ
ໃນວັນທີ 31 ທັນວາ 2018							
ຕົ້ນທຶນ	267.896.239.572	124.500.072.442	4.710.433.652	18.764.696.839	14.501.083.155	31.289.092.274	461.661.617.934
ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ	15.110.076.572	7.813.075.409	100.718.398	109.093.014	347.306.652	5.774.072.134	29.254.342.179
ຫັກ ຄ່າຫຼ້ຍຫ້ຽນສະສົມ	-	(16.318.301.647)	(2.881.606.457)	(5.757.717.583)	(5.608.345.399)	-	(30.565.971.086)
ມູນຄ່າຕາມບັນຊີສຸດທິ	283.006.316.144	115.994.846.204	1.929.545.593	13.116.072.270	9.240.044.408	37.063.164.408	460.349.989.027
ທ້າຍປີ ວັນທີ 31 ທັນວາ 2018							
ຍອດຍົກມາຕາມບັນຊີສຸດທິ	283.006.316.144	115.994.846.204	1.929.545.593	13.116.072.270	9.240.044.408	37.063.164.408	460.349.989.027
ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ	12.812.950.246	5.200.656.184	80.511.536	555.740.363	393.271.960	1.678.013.743	20.721.144.032
ການເພີ່ມຂຶ້ນ	-	-	1.114.309.106	499.263.976	585.799.641	18.979.200.197	21.178.572.920
ການໂອນເຂົ້າ(ອອກ)	-	25.282.075.560	113.807.440	13.434.029.641	112.566.675	(38.942.479.316)	-
ການຕັດ-ຕົ້ນທຶນ	-	-	(16.837.843)	(146.859.680)	(229.129.800)	-	(392.827.323)
ການຕັດ-ຄ່າຫຼ້ຍຫ້ຽນ	-	-	16.835.445	146.855.950	229.129.267	-	392.820.662
ຄ່າຫຼ້ຍຫ້ຽນ	-	(5.013.671.489)	(673.895.493)	(3.747.844.245)	(2.466.830.540)	-	(11.902.241.767)
ຍອດເຫຼືອຕາມບັນຊີສຸດທິ	295.819.266.390	141.463.906.459	2.564.275.784	23.857.258.275	7.864.851.611	18.777.899.032	490.347.457.551
ໃນວັນທີ 31 ທັນວາ 2018							
ຕົ້ນທຶນ	267.896.239.572	149.782.148.002	5.921.712.355	32.551.130.776	14.970.319.671	11.326.813.155	482.447.363.531
ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ	27.923.026.818	13.013.731.593	181.229.934	664.833.377	740.578.612	7.452.085.877	49.975.486.211
ຫັກ ຄ່າຫຼ້ຍຫ້ຽນສະສົມ	-	(21.331.973.136)	(3.538.666.505)	(9.358.705.878)	(7.846.046.672)	-	(42.075.392.191)
ມູນຄ່າຕາມບັນຊີສຸດທິ	295.819.266.390	141.463.906.459	2.564.275.784	23.857.258.275	7.864.851.611	18.777.899.032	490.347.457.551

12. ທີ່ດິນ ອາຄານ ແລະ ອຸປະກອນ.ສຸດທິ (ຕໍ່)

ໃນປີ 2018, ຜູ້ບໍລິຫານໄດ້ພິຈາລະນາຄືນເຖິງອາຍຸການໃຊ້ງານຂອງອາຄານ ການປັບປຸງທີ່ດິນ ແລະ ເພີນີເຈີ ແລະ ສິ່ງຕິດຕັ້ງ, ຜົນກະທົບຈາກການພິຈາລະນາຄືນນີ້ແມ່ນເຮັດໃຫ້ຄ່າຫຼ້ຍຫ້ຽນຫຼຸດລົງ ເປັນຈຳນວນເງິນ 3.017.902.933 ກີບ (ບົດອະທິບາຍຂໍ້ 5).

ໃນປີ 2018, ການເພີ່ມຂຶ້ນເປັນຈຳນວນ 21.180 ລ້ານກີບ ປະກອບມີ ລາຍການເຄື່ອນໄຫວເງິນສົດຈຳນວນ 20.605 ລ້ານກີບ ແລະ ການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ ຈຳນວນ 575 ລ້ານກີບ. ການກໍ່ສ້າງກຳລັງດຳເນີນງານທັງໝົດ ມີການກໍ່ສ້າງສາຂາໃໝ່. ສາຂາສະຫວັນນະເຂດ ແລະ ທ່າແຂກ. ສາຂາປາກຊັນສຳເລັດສົມບຸນ ແລະ ເລີ່ມດຳເນີນງານໃນ ວັນທີ 17 ມີຖຸນາ 2018.

ດິນມີຈຳນວນ 295.819.266.390 ລ້ານກີບ ແມ່ນໃຊ້ເປັນຫຼັກຊັບຄ้ำປะกัน ໃນເງິນກູ້ຢືມໄລຍะสั้นกับทะนาคาน ต่างปะเทด ใน สปป ลาว (ບົດອະທິບາຍຂໍ້ 14).

13. ຊັບສົມບັດຄົງທີ່ ທີ່ບໍ່ມີຕົວຕົນ. ສຸດທິ

ທ້າຍປີ ວັນທີ 31 ທັນວາ 2017	ກີບ
ອດຍົກມາຕາມບັນຊີສຸດທິ	514.579.909
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	57.701.964
ການເພີ່ມຂຶ້ນ	174.638.393
ຄ່າຕັດจ่าย	(307.144.234)
ມູນຄ່າຕາມບັນຊີສຸດທິ	439.776.032

ໃນວັນທີ 31 ທັນວາ 2017	
ຕົ້ນທຶນ	877.041.384
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	57.701.964
ຫັກ ຄ່າຕັດจ่ายสะสม	(494.967.316)
ยอดเหลือตามบันชีสุดท้าย	439.776.032

ທ້າຍປີ ວັນທີ 31 ທັນວາ 2018	ກີບ
ยอดยกมาตามบันชีสุดท้าย	439.776.032
ส่วนต่างจากการแปลงค่าอัตราแลกปลี่ยน	16.776.489
การเพิ่มขึ้น	19.529.319
ค่าตัดจ่าย	(308.434.261)
ยอดเหลือตามบันชีสุดท้าย	167.647.579

14. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	2018 ກີບ	2017 (ຄັດແກ້) ກີບ
ໜີ້ຕ້ອງສົ່ງການຄ້າ– ບຸກຄົນທີສາມ	44.053.148.989	33.636.967.418
ໜີ້ຕ້ອງສົ່ງການຄ້າ– ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 22)	-	9.644.755.182
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	44.053.148.989	43.281.722.600

15. ເງິນກູ້ຢືມ

	2018 ກີບ	2017 ກີບ
ໝຸນວຽນ		
ເງິນເບີກເກີນບັນຊີ	4.366.357.930	2.153.521.478
ເງິນກູ້ຢືມໃນໄລຍະສັ້ນ	53.195.440.379	41.639.110.963
ສ່ວນທີ່ໝຸນວຽນຂອງເງິນກູ້ຢືມໃນໄລຍະຍາວ	7.199.814.350	252.010.000
ບໍ່ໝຸນວຽນ		
ເງິນກູ້ຢືມໃນໄລຍະຍາວ	21.831.908.085	354.800.090
ເງິນກູ້ຢືມ	86.593.520.744	44.399.442.531

ອັດຕາດອກເບ້ຍຂອງເງິນກູ້ຢືມ ຂອງບໍລິສັດ ມີດັ່ງນີ້:

	2018 ກີບ	2017 ກີບ
ເງິນກູ້ຢືມ		
ອັດຕາດອກເບ້ຍຄົງທີ່	81.950.945.865	13.018.780.107
ອັດຕາດອກເບ້ຍຂຶ້ນລົງ	4.642.574.879	31.380.662.424
ເງິນກູ້ຢືມ	86.593.520.744	44.399.442.531

ໃນເດືອນ ເມສາ 2018 ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມໄລຍະສັ້ນກັບທະນາຄານຕ່າງປະເທດໃນ ສປປ ລາວ ເຊິ່ງມີອັດຕາດອກເບ້ຍຄົງທີ 6,4% ຕໍ່ປີ ຕ້ອງຊຳລະເງິນຕົ້ນຄືນພາຍໃນ 150 ມື້ ພາຍຫຼັງທີ່ເບີກຖອນເງິນກູ້ຢືມດັ່ງກ່າວ ແລະ ຕ້ອງຊຳລະດອກເບ້ຍເປັນລາຍເດືອນ. ເງິນກູ້ຢືມໃຊ້ຫຼັກຊັບຄ້ຳປະກັນໂດຍໃຊ້ດິນຂອງຜູ້ຖືຮຸ້ນ, ໃນໄລຍະສິ້ນສຸດ ວັນທີ 31 ທັນວາ 2018 ໄດ້ຖອນເງິນຈຳນວນ 69.645 ລ້ານກີບ.

ໃນເດືອນ ເມສາ 2018 ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມໄລຍະຍາວກັບທະນາຄານຕ່າງປະເທດໃນ ສປປລາວ ເຊິ່ງມີອັດຕາດອກເບ້ຍຄົງທີ 6% ຕໍ່ປີ ຕ້ອງຊຳລະເງິນຕົ້ນຄືນພາຍໃນ ເດືອນທັນວາ ປີ 2022 ແຕ່ເງິນຕົ້ນດັ່ງກ່າວຕ້ອງຊຳລະເປັນໄຕມາດ ເລີ່ມຈາກເດືອນ ມີນາ 2019 ແລະ ດອກເບ້ຍແມ່ນຕ້ອງຊຳລະທຸກໆເດືອນ. ເງິນກູ້ຢືມໃຊ້ຫຼັກຊັບຄ້ຳປະກັນໂດຍໃຊ້ດິນຂອງຜູ້ຖືຮຸ້ນ, ໃນວັນທີ 27 ສິງຫາ 2018, ຈຳນວນເງິນກູ້ຢືມໃນສັນຍາໄດ້ຖືກດັດແກ້ຈາກ 30.000 ລ້ານກີບ ມາເປັນ 110 ລ້ານ ບາດ, ໃນໄລຍະສິ້ນສຸດ ວັນທີ 31 ທັນວາ 2018 ຈຳນວນເງິນກູ້ຢືມດັ່ງກ່າວແມ່ນໄດ້ເບີກຖອນເຕັມ ເຊິ່ງມີມູນຄ່າທຽບເທົ່າ 29.307 ລ້ານກີບ.

ຄ່າທຳນຽມບໍລິການການເງິນ ໄດ້ຖືກຮັບຮູ້ເປັນລາຍຈ່າຍຈ່າຍລ່ວງໜ້າເມື່ອລາຍການນັ້ນເກີດຂຶ້ນ ແລະ ຖືກຕັດຄ່າເຊື່ອມຕະຫຼອດໄລຍະຂອງສັນຍາ.

16. ໜີ້ຕ້ອງສົ່ງອາກອນກຳໄລ

ການເຄື່ອນໄຫວຂອງ ໜີ້ຕ້ອງສົ່ງອາກອນກຳໄລ ໃນປີ 2018 ມີດັ່ງຕໍ່ໄປນີ້:

	ກີບ
ໜີ້ຕ້ອງສົ່ງ (ຕ້ອງຮັບ) ອາກອນກຳໄລ ວັນທີ 1 ມັງກອນ 2018	(58.062.601)
ຊຳລະໃນລະຫວ່າງປີ	(154.000.000)
ອາກອນກຳໄລສຳລັບປີ (ບົດອະທິບາຍ ຂໍ້ທີ 19)	-
ອາກອນກຳໄລຕ້ອງສົ່ງ (ຕ້ອງຮັບ) ໃນວັນທີ 31 ທັນວາ 2018	(212.062.601)

ບໍລິສັດໄດ້ຈ່າຍອາກອນລາຍໄດ້ຂອງປີ 2018 ຫລາຍກວ່າມູນຄ່າທີ່ເກີດຈິງໃນປີ. ດັ່ງນັ້ນບໍລິສັດຈຶ່ງບັນທຶກເປັນຄ່າໃຊ້ຈ່າຍອາກອນລາຍໄດ້ລ່ວງໜ້າໃນບັນຊີຊັບສິນໝຸນວຽນອື່ນໆ ມູນຄ່າ 212.062.601 ກີບ. ແລະ ບັນຊີດັ່ງກ່າວຈະຖືກນຳໄປຫັກລ້າງກັບລາຍຈ່າຍອາກອນລາຍໄດ້ໃນປີຖັດໄປ.

17. ເງິນມັດຈຳຈາກລູກຄ້າ

ເງິນຝາກຈະຖືກຊຳລະ ແລະ ສະສາງ ຕາມປົກກະຕິ ພາຍໃນ 6-12 ເດືອນ ເມື່ອລູກຄ້າຍອມຮັບ ການຈັດສົ່ງ ລິບ ແລະ ການຕິດຕັ້ງ ແລະ ການກວດສອບສຳເລັດ.

18. ໜີ້ສິນໝຸນວຽນອື່ນໆ

ໜີ້ສິນໝຸນວຽນອື່ນໆ ແມ່ນລາຍຈ່າຍຄ້າງຈ່າຍ ປະກອບມີ ຄ່າເຊົ່າທີ່ດິນ ມູນຄ່າ 6.597.564.621 ກີບ (ໃນປີ 2017: 1.965.103.673 ກີບ) ແລະ ໜີ້ສິນໝຸນວຽນອື່ນ ມູນຄ່າ 5.671.272.155 ກີບ (2017: 6.031.554.544 ກີບ).

19. ທຶນ

	ຈຳນວນຮຸ້ນ ຮຸ້ນ	ຮຸ້ນສາມັນ ກີບ	ສ່ວນເກີນມູນຄ່າຮຸ້ນ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2017	165.000.000	330.000.000.000	24.735.724.722	354.735.724.722
ອອກຮຸ້ນ	-	-	-	-
ໃນວັນທີ 31 ທັນວາ 2017	165.000.000	330.000.000.000	24.735.724.722	354.735.724.722
ອອກຮຸ້ນ	-	-	-	-
ໃນວັນທີ 31 ທັນວາ 2018	165.000.000	330.000.000.000	24.735.724.722	354.735.724.722

ໃນວັນທີ 31 ທັນວາ 2018 ບໍລິສັດມີທຶນຈົດທະບຽນ ທີ່ມີຈຳນວນຮຸ້ນສາມັນ 165.000.000 ຮຸ້ນ ທີ່ມີມູນຄ່າຮຸ້ນລະ 2.000 ກີບ ເຊິ່ງຮຸ້ນດັ່ງກ່າວໄດ້ຊຳລະເຕັມ.

20. ສຳຮອງ

ສຳຮອງເງິນຕາມກົດໝາຍ

	2018 ກີບ	2017 ກີບ
ວັນທີ 1 ມັງກອນ 2018	3.332.971.187	2.906.968.288
ການເພີ່ມຂຶ້ນ	319.056.158	426.002.899
ວັນທີ 31 ທັນວາ 2018	3.652.027.345	3.332.971.187

ເງິນສຳຮອງຕາມກົດໝາຍ ຖືກສ້າງຂຶ້ນໂດຍສອດຄ່ອງກັບຂໍ້ຮຽກຮ້ອງໃນ ມາດຕາທີ 156. ສຳຮອງເງິນຕາມກົດໝາຍແມ່ນການສຳຮອງຕາມກົດໝາຍວິສາຫະກິດ ຂອງ ສປປ ລາວ. ເຊິ່ງຕ້ອງມີການຕັ້ງສຳຮອງຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ ຕາມກົດໝາຍຈົນກວ່າທຶນສຳຮອງດັ່ງກ່າວຈະຮອດ 50% ຂອງທຶນຈົດທະບຽນ.

ເງິນສຳຮອງອື່ນໆ

ນອກຈາກ ເງິນສຳຮອງຕາມກົດໝາຍ ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງອື່ນໆ. ໂດຍເປັນໄປຕາມນະໂຍບາຍຂອງທາງບໍລິສັດ ທີ່ໄດຮັບການຈົດທະບຽນກັບ ກະຊວງການເງິນຂອງ ສປປ ລາວ ໃນວັນທີ 22 ກັນຍາ 2017. ເງິນສຳຮອງອື່ນໆ ແມ່ນກຳນົດໄວ້ໃຊ້ສຳລັບເຫດການທີ່ບໍ່ແນ່ນອນ ເຊັ່ນ: ໄພພິບັດທາງທຳມະຊາດ. ໂດຍທາງ ບໍລິສັດ ຈະໃຊ້ເງິນສຳຮອງດັ່ງກ່າວໃນການຟື້ນຟູເພື່ອໃຫ້ນຳມາໃຊ້ງານຕາມປົກກະຕິ.

21. ລາຍຈ່າຍຕາມລັກສະນະ

ລາຍຈ່າຍທີ່ສຳຄັນໄດ້ຈັດປະເພດຕາມລັກສະນະດັ່ງນີ້:

	2018 ກີບ	2017 ກີບ
ຄ່າປ່ຽນແປງເຄື່ອງໃນສາງ	283.843.535.834	248.467.638.615
ເງິນເດືອນ ແລະ ແຮງງານ ແລະ ຜົນປະໂຫຍດອື່ນໆຂອງພະນັກງານ	27.943.556.205	28.658.506.857
ຄ່າເຊື່ອມມູນຄ່າເຄື່ອງໃນສາງ (ຖືກຕີກັບ) ແມ່ນຂຶ້ນກັບມູນຄ່າສຸດທິ	(2.712.071.710)	(2.174.786.214)
ຄ່າຫລຸ້ຍຫ້ຽນ (ບົດອະທິບາຍ ຂໍ້ທີ 10)	12.210.675.983	10.233.280.643
ການສົ່ງເສີມການຂາຍ ແລະ ການດຳເນີນງານ	1.637.902.621	1.143.696.903
ຄ່າເຊົ່າ - ຫ້ອງການ ແລະ ຫ້ອງວາງສະແດງ	2.994.974.341	2.744.918.886
ຄ່ານ້ຳມັນເຊື້ອໄຟ	1.479.115.164	1.060.828.532
ຄ່າບຳລຸງຮັກສາ ແລະ ສ້ອມແປງ	774.663.957	923.703.557
ເຄື່ອງສາທາລະນູປະໂພກ	2.474.409.296	2.494.784.740
ຄ່າຜູ້ຊ່ຽວຊານ	1.524.218.419	1.882.381.591
ຄ່າອື່ນໆ	3.204.950.780	5.270.222.956
	335.375.930.890	300.705.177.066

22. ອາກອນກຳໄລ

ສິດທິພິເສດສຳລັບບໍລິສັດ ຈົດທະບຽນໃນຕະຫຼາດຫຼັກຊັບ ໝາຍເຖິງບໍລິສັດສາມາດຮັບອັດຕາຫຼຸດຈາກ 24% ເຖິງ 19% ເປັນໄລຍະ ເວລາ 4 ປີທຳອິດຫຼັງຈາກເຂົ້າຢູ່ໃນຕະຫຼາດຫຼັກຊັບ ແຫ່ງ ສປປ ລາວ. ອັດຕານີ້ແມ່ນນຳໃຊ້ ຈາກປີ 2015 ເຖິງປີ 2018 ໂດຍອີງຕາມດຳ ລັດຂອງປະທານປະເທດກ່ຽວກັບອາກອນກຳໄລຂອງບໍລິສັດໃນຕະຫຼາດຫຼັກຊັບເລກທີ 1/ປປທ ລົງວັນທີ 28 ທັນວາ 2010 ແລະ ກົດໝາຍສ່ວຍສາອາກອນລົງວັນທີ 15 ທັນວາ 2015.

ບໍລິສັດ ບໍ່ໄດ້ຮັບຮູ້ອາກອນລາຍໄດ້.ການຈ່າຍ ຫຼື ຮັບ ໃນອະນາຄົດສຳລັບຜົນແຕກຕ່າງຊົ່ວຄາວ. ອາກອນລາຍໄດ້ແມ່ນຮັບຮູ້ຕາມຜົນ ການດຳເນີນງານຂອງໄລຍະ ແລະ ອັດຕາອາກອນທີ່ກ່ຽວຂ້ອງ.

	2018 ກີບ
ການສົມທຽບລະຫວ່າງອາກອນລາຍໄດ້ ແລະ ກຳໄລທາງບັນຊີ:	
ກຳໄລທາງບັນຊີກ່ອນອາກອນ	3.190.561.575
ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການສຳລັບອາກອນ (1)	(4.590.873.059)
ອາກອນລາຍໄດ້	(1.400.311.484)

ຄິດໄລ່ອາກອນ ໃນອັດຕາອາກອນ 19 %

(1) ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການ ສຳລັບອາກອນສ່ວນໃຫຍ່ປະກອບມີ ຂາດທຶນທີ່ບໍ່ໄດ້ຮັບຮູ້ຈາກການປະເມີນຊັບ ສິນ, ໜີ້ສິນ ໃນສະກຸນເງິນຕາຕ່າງປະເທດໃນມື້ປິດບັນຊີ.

23. ກຳໄລຕໍ່ຮຸ້ນ

ກຳໄລຕໍ່ຮຸ້ນຂັ້ນພື້ນຖານແມ່ນຖືກຄິດໄລ່ໂດຍການຫານກັບກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງ ບໍລິສັດໂດຍຖົ່ວສະເລ່ຍນ້ຳ ໜັກທີ່ຖືໂດຍຜູ້ຖືຮຸ້ນ ທີ່ອອກໃນລະຫວ່າງປີ.

	2018	2017
ກຳໄລສຸດທິສຳລັບປີທີ່ສາມາດຈ່າຍໃຫ້ຜູ້ຖືຮຸ້ນ (ກີບ)	3.190.561.575	2.788.783.970
ຕົວສະເລ່ຍຕາມນ້ຳໜັກຮຸ້ນສາມັນ(ຮຸ້ນ)	165.000.000	165.000.000
ກຳໄລຕໍ່ຮຸ້ນ (ກີບ)	20	17

24. ເງິນປັນຜົນ

ຈາກການປະຊຸມສາມັນປະຈຳປີຜູ້ຖືຮຸ້ນ ໃນວັນທີ 6 ເມສາ 2018 ໄດ້ຂໍ້ສະຫຼຸບວ່າ ຈະຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະ ກິດ ຂອງ ປີ 2017 ໃນອັດຕາ 10 ກີບ ຕໍ່ຮຸ້ນ (ປີ 2017: 20 ກີບ ຕໍ່ຮຸ້ນ) ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ 1.650 ລ້ານ ກີບ (ປີ 2017: 3.300 ລ້ານກີບ) ເງິນປັນຜົນຖືກຈ່າຍໃຫ້ກັບຜູ້ຖືຮຸ້ນໃນເດືອນ ພຶດສະພາ 2018.

ໃນເດືອນພຶດສະພາ 2017 ບໍລິສັດ ຈ່າຍເງິນປັນຜົນສຳລັບການດຳເນີນທຸລະກິດຂອງປີ 2016 ແກ່ຜູ້ຖືຮຸ້ນໃນອັດຕາ 20 ກີບຕໍ່ຮຸ້ນ (ປີ 2016: 45 ກີບຕໍ່ຮຸ້ນ) ລວມເປັນເງິນ 3.300 ລ້ານກີບ (ປີ 2016: 7.425 ລ້ານກີບ).

25. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ໂດຍກົງ ຫລື ໂດຍທາງອ້ອມໂດຍຜ່ານໜຶ່ງ ຫຼືຫຼາຍ ສື່ກາງ. ການຄວບຄຸມ. ຫຼືແມ່ນຄວບຄຸມ ຫຼື ຢູ່ພາຍ ໃຕ້ການຄວບຄຸມທົ່ວໄປທີ່ມີ ບໍລິສັດ. ລວມທັງບໍລິສັດຖືຮຸ້ນ. ບໍລິສັດຍ່ອຍ ແລະ ບໍລິສັດອື່ນໆທີ່ກ່ຽວຂ້ອງກິດຈະການຂອງ ບໍລິສັດ. ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ. ໂດຍກົງຫຼືທາງອ້ອມ. ມີສິດໃນການລົງຄະແນນສຽງຂອງບໍລິສັດທີ່ເຮັດໃຫ້ ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ. ຜູ້ບໍລິຫານ ລວມທັງຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກ ໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບບຸກຄົນເຫລົ່ານີ້ຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາສາຍສຳພັນ ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ບໍລິສັດ ຄຳນຶງເຖິງເນື້ອຫາຂອງ ສາຍສຳພັນ ແລະບໍ່ພຽງແຕ່ຮູບ ແບບທາງດ້ານກົດໝາຍ.

ບໍລິສັດ ໄດ້ຖືກບໍລິຫານໂດຍ ຄອບຄົວ ສຸກຄະບັນດິດ ເຊິ່ງເປັນຜູ້ທີ່ຖືຮຸ້ນສ່ວນໃຫຍ່ ຂອງບໍລິສັດ. ຊຶ່ງຖືຮຸ້ນ 51% ຂອງຮຸ້ນ ບໍລິສັດ. ສ່ວນ 34% ຂອງຮຸ້ນ ບໍລິສັດ ແມ່ນຖືກຖືໂດຍ "Global house International Limited". ຊຶ່ງເປັນ ບໍລິສັດ ທີ ຈົດທະບຽນ ໃນປະເທດ ໄທ ແລະ ສ່ວນທີ່ເຫຼືອ 15% ແມ່ນຖືກຖືໂດຍບຸກຄົນທົ່ວໄປ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໃນປີ ວັນທີ 31 ທັນວາ 2018 ທີ່ມີຄວາມສຳຄັນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

25.1 ລາຍຮັບ ແລະ ລາຍຈ່າຍ

	2018 ກີບ	2017 ກີບ
ຊື້ສິນຄ້າ ຈາກພາກສ່ວນທີ່ກ່ຽວຂ້ອງ	191.144.422	4.161.534.834
ຄ່າເຊົ່າ	2.033.410.859	7.236.364.422

ລາຍຈ່າຍໃນການເຊົ່າ ແມ່ນ ຄ່າເຊົ່າທີ່ດິນ ແລະ ສິ່ງປຸກສ້າງ ຈາກຜູ້ຖືຮຸ້ນຫຼັກ ເພື່ອໃນການດຳເນີນງານ ໂດຍຄ່າເຊົ່າແມ່ນ ຂຶ້ນຢູ່ກັບການຕົກລົງທັງສອງຝ່າຍ ໂດຍອ້າງອີງຈາກລາຄາຕາມທ້ອງຕະຫຼາດ.

25.2 ຍອດຍັງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງກັນ

	2018 ກີບ	2017 ກີບ
ຄ່າເຊົ່າຄ້າງຈ່າຍ	6.896.265.613	1.906.443.893
ໜີ້ຕ້ອງສິ່ງການຄ້າ – Siam Global House Public Company Limited	39.476.168	41.064.818

25. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

25.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ

ຜູ້ບໍລິຫານຫຼັກລວມເຖິງຜູ້ອຳນວຍການ. ເງິນຊົດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສຳລັບການ ບໍລິການການຈ້າງງານແມ່ນດັ່ງຕໍ່ໄປນີ້:

	2018 ກີບ	2017 ກີບ
ເງິນເດືອນ	1.794.825.000	1.784.400.000

26. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສຳຄັນ

ພັນທະຄ່າເຊົ່າໃນການດຳເນີນງານ. ເຊິ່ງບໍລິສັດເປັນຜູ້ເຊົ່າ

ບໍລິສັດ ເຊົ່າທີ່ດິນ ແລະ ຫ້ອງການພາຍໃຕ້ສັນຍາທີ່ບໍ່ສາມາດຍົກເລີກໄດ້ ຈາກຜູ້ຖືຮຸ້ນ. ໄລຍະການໃຫ້ເຊົ່າແມ່ນ 2 ຫາ 3 ປີ. ແລະ ສັນຍາເຊົ່າສ່ວນໃຫຍ່ນີ້ແມ່ນສາມາດຕໍ່ເມື່ອສັນຍາເກົ່າໝົດອາຍຸໃນອັດຕາທີ່ຕົກລົງກັນໃໝ່.

	2018 ກີບ	2017 ກີບ
ໜ້ອຍກວ່າ 1 ປີ	7.655.803.273	9.325.478.909
1 ຫາ 5 ປີ	15.949.074.494	24.413.546.063
	23.604.877.767	33.739.024.972

27. ສິດໃນການເປັນຜູ້ຈຳໜ່າຍລິບ ມິດຊູບິຊິ ແລະ ບັນໄດເລື່ອນ

ໃນເດືອນກໍລະກົດ 2015. ບໍລິສັດໄດ້ສົ່ງໜັງສືໃຫ້ບໍລິສັດ Mitsubishi Electric Corporation (ມິດຊູບິຊິ) ເພື່ອແຈ້ງການປ່ຽນແປງຜູ້ຖືຮຸ້ນລາຍໃຫຍ່ ແລະ ແຜນການແຍກການດຳເນີນງານ ລິບ ແລະ ບັນໄດເລື່ອນອອກຈາກບໍລິສັດ. ບໍລິສັດ ໄດ້ຮັບໜັງຕອບກັບເຊິ່ງລະບຸວ່າ " ບໍລິສັດ ຕ້ອງການຈຳໜ່າຍ ລິບ ມິຊູບິຊິ ແລະ ບັນໄດເລື່ອນອອກຈາກ ການດຳເນີນງານຂອງຕົນໂດຍການສ້າງຕັ້ງ ບໍລິສັດໃໝ່ ເພື່ອດຳເນີນການສະເພາະກັບຍີ່ຫໍ້ ມິຊູບິຊິ" ຜູ້ບໍລິຫານເຂົ້າໃຈວ່າ ຂໍ້ກຳນົດນີ້ເປັນເພາະມີການປ່ຽນແປງຜູ້ບໍລິຫານລາຍໃຫຍ່ທີ່ມີສາລະສຳຄັນ ແລະ ສົ່ງຜົນຕໍ່ຄວາມລັບທາງດ້ານເຕັກນິກ ທີ່ທາງ ມິຊູບິຊິຕ້ອງການຄວາມໝັ້ນໃຈ.

ໃນເດືອນ ມັງກອນ 2019 ບໍລິສັດ ແລະ ມິດຊູບິຊິ ໄດ້ເຈລະຈາກ່ຽວກັບການຮ່ວມມື ແລະ ການກະກຽມທາງທຸລະກິດໃນອະນາຄົດ ແລະ ເຫັນດີທີ່ ບໍລິສັດ ຈະຍຸດຕິສິດໃນການເປັນຜູ້ຈຳໜ່າຍລິບ ແລະ ບັນໄດເລື່ອນຍີ່ຫໍ້ ມິດຊູບິຊິ. ປະຈຸບັນ ຂໍ້ກຳນົດ ແລະ ເງື່ອນໄຂສຸດທ້າຍຢູ່ໃນຂັ້ນຕອນການເຈລະຈາ ແລະ ຄາດຈະສະຫຼຸບພາຍໃນເດືອນ ກໍລະກົດ 2019.

27. ສິດໃນການເປັນຜູ້ຈຳໜ່າຍລົບ ມິດຊູບິຊິ ແລະ ບັນໃດເລື່ອນ (ຕໍ່)

ລາຍຮັບຂອງບໍລິສັດ ຈາກການຂາຍ ລິບມິຊູບິຊິ ແລະ ບັນໃດເລື່ອນແມ່ນ 7% ຂອງລາຍຮັບທັງໝົດ ສຳລັບໄລຍະ 12 ເດືອນ ທ້າຍປີ ວັນທີ 31 ທັນວາ 2018. ທຶນໝຸນວຽນຫຼັກໃນວັນທີ 31 ທັນວາ 2018 ມີດັ່ງນີ້:

	2018 ກີບ
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	4.331.072.759
ເຄື່ອງໃນສາງ	21.191.696.609
ເງິນມັດຈຳຈາກລູກຄ້າ	24.740.712.188
ໜີ້ຕ້ອງສົ່ງການຄ້າ - ມິດຊູບິຊິ	789.183.617

28. ຂໍ້ມູນເພີ່ມເຕີມ

ບໍລິສັດ ໄດ້ນຳສະເໜີໃບລາຍງານຜົນໄດ້ຮັບທີ່ຍັງບໍ່ໄດ້ກວດສອບສຳລັບ 3 ເດືອນ ສິ້ນສຸດວັນທີ 31 ທັນວາ 2018 ຕາມບົດອະທິບາຍນີ້ ເອກະສານລາຍງານການເງິນທີ່ບໍ່ໄດ້ກວດສອບ ເຊິ່ງເປັນໄປຕາມກົດລະບຽບການເປີດເຜີຍ ແລະ ການລາຍງານ ທີ່ກຳນົດໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສັງລວມໃບລາຍງານຜົນໄດ້ຮັບ

	ກີບ	ກີບ
ລາຍຮັບຈາກການຂາຍ	177.679.194.250	82.216.930.992
ລາຍຮັບຈາກການບໍລິການ	953.327.887	233.237.476
ຕົ້ນທຶນການຂາຍ	(152.648.273.427)	(71.504.979.211)
ຕົ້ນທຶນການບໍລິການ	(210.598.375)	(1.040.362.450)
ກຳໄລລວມ	**25.773.650.335**	**9.904.826.807**
ລາຍຮັບອື່ນໆ	2.974.078.970	399.541.862
ລາຍຈ່າຍການຂາຍ	(15.248.162.899)	(8.700.907.375)
ລາຍຈ່າຍບໍລິຫານ	(12.023.589.429)	(6.224.837.150)
ຕົ້ນທຶນການເງິນ	(2.741.788.035)	(559.172.755)
ກຳໄລ (ຂາດທຶນ) ຈາກອັດຕາແລກແປ່ງ ສຸດທິ	2.128.736.184	1.404.078.627
ກຳໄລກ່ອນຫັກອາກອນ	**862.925.126**	**(3.776.469.984)**
ອາກອນລາຍໄດ້	-	892.441.028
ກຳໄລ (ຂາດທຶນ) ສຸດທິ ໃນປີ	**862.925.126**	**(4.668.911.012)**

29. ເຫດການທີ່ຈະເກີດຂຶ້ນຫລັງໄລຍະການລາຍງານ

ບໍ່ມີເຫດການສຳຄັນເກີດຂຶ້ນພາຍຫຼັງມື້ອອກໃບລາຍງານຖານະການເງິນ ທີ່ຈຳເປັນຕ້ອງມີການດັດແກ້ ຫຼື ເປີດເຜີຍ ໃນ ເອກະສານ ລາຍງານການເງິນສຳລັບປີສິ້ນສຸດ ວັນທີ 31 ທັນວາ 2018.